- ອີງຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ສະບັບເລກທີ 032/ສພຊ, ລົງວັນທີ 17 ພະຈິກ 2016;
- ອີງຕາມດຳລັດວ່າດ້ວຍເຂດເສດຖະກິດພິເສດ ສະບັບເລກທີ 188/ລບ, ລົງວັນທີ 07 ມິຖຸນາ 2018;
- ອີງຕາມໃບທະບຽນສຳປະທານການພັດທະນາເຂດເສດຖະກິດ....................ສະບັບເລກທີ.............., ລົງວັນທີ ...../...../.....

ຄະນະຄຸ້ມຄອງເຂດເສດຖະກິດ..........................................ໄດ້ອອກໃບຢັ້ງຢືນສິດນຳໃຊ້ອະສັງຫາລິມະສັບ
ປະເພດ..........................................ເນື້ອ..........................................
ໃຫ້ແກ່ທ່ານ/ທຸ..........................................ບໍລິສັດ..........................................
ວັນເດືອນປີເກີດ..............................., ສັນຊາດ..............................., ອາຊີບ..............................
ໜັງສືຜ່ານແດນເລກທີ/ເລກບັດປະຈຳໂຕ.................... ລົງວັນທີ...../...../.....ອອກໃຫ້ທີ່....................
ທີ່ຢູ່ປັດຈຸບັນບ້ານ.............................ເມືອງ.............................ແຂວງ.............................
ມີຈຸດປະສົງນຳໃຊ້ອະສັງຫາລິມະສັບເພື່ອ..........................................
ການໄດ້ມາຂອງສິດນຳໃຊ້..........................................
ທີ່ຕັ້ງຂອງອະສັງຫາລິມະສັບ ອີງຕາມແຜນວາດທີ່ດິນ ສະບັບເລກທີ...../..........., ລົງວັນທີ..............................
ປະເພດອະສັງຫາລິມະສັບ..........................................
ຈຳນວນ..............................ຂະໜາດ..............................ເນື້ອທີ່..............................
ໃບຢັ້ງຢືນສະບັບນີ້ ມີສິດນຳໃຊ້ໄດ້ນັບແຕ່ວັນທີ..............................ຫາ ວັນທີ..............................

ທີ່..............................., ວັນທີ..............................

ຫົວໜ້າຄະນະຄຸ້ມຄອງ
ເຂດເສດຖະກິດພິເສດ..............................

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຜນການ ແລະ ການລົງທຶນ
ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ
ຄະນະຄຸ້ມຄອງເຂດເສດຖະກິດພິເສດ.............. ເລກທີ.........../..........

## ແຜນວາດ ທີ່ຕັ້ງຂອງອະສັງຫາລິມະຊັບ

**ທີ່ຕັ້ງຂອງອະສັງຫາລິມະຊັບ:**
ເຂດເສດຖະກິດ..........................................................................
ຖະໜົນ:.......................ບ້ານ.......................ເມືອງ.......................ແຂວງ.......................
ຕັ້ງຢູ່ດອນດິນເລກທີ.......................................ໃບຢັ້ງຢືນສິດນຳໃຊ້ທີ່ດິນ.......................
ເນື້ອທີ່..........................................................................




ທີ່..............................., ວັນທີ...........................

ຫົວໜ້າຄະນະຄຸ້ມຄອງ
ເຂດເສດຖະກິດພິເສດ..............................

ສຳຫຼວດວັດແທກໂດຍ:..........................................

..........................................................

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຜນການ ແລະ ການລົງທຶນ
ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ
ຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ

# ຄູ່ມືແນະນໍາ

# ການອອກໃບອະນຸຍາດປຸກສ້າງ, ໃບຢັ້ງຢືນສິ່ງປຸກສ້າງອາຄານ ແລະ ໂຮງງານ ໃນເຂດ ເສດຖະກິດພິເສດ ນະຄອນຫຼວງວຽງຈັນ

ນະຄອນຫຼວງວຽງຈັນ (ສະບັບປີ2021)

## ບ່ອນອີງດ້ານນິຕິກຳ

- ອີງຕາມ ກົດໝາຍ ສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
- ອີງຕາມ ກົດໝາຍ ວ່າດ້ວຍວ່າດ້ວຍການກໍ່ສ້າງ ສະບັບເລກທີ 05/ສພຊ, ລົງວັນທີ 26 ພະຈິກ 2009;
- ອີງຕາມ ກົດໝາຍ ວ່າດ້ວຍການຜັງເມືອງ, ສະບັບເລກທີ 40/ສພຊ, ລົງວັນທີ 16 ພະຈິກ 2017;
- ອີງຕາມ ດຳລັດ ວ່າດ້ວຍເຂດເສດຖະກິດພິເສດ ສະບັບເລກທີ 188/ລບ, ລົງວັນທີ 07 ມິຖຸນາ 2018;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະຄຸ້ມຄອງເຂດເສດຖະກິດພິເສດ ແຂວງ ນະຄອນຫຼວງ ສະບັບເລກທີ 1971/ກຜທ, ລົງວັນທີ 15 ສິງຫາ 2018;
- ອີງຕາມ ຂໍ້ຕົກລົງວ້າດ້ວຍການຄຸ້ມຄອງການກໍ່ສ້າງ ສະບັບເລກທີ 2241/ຍທຂ, ລົງວັນທີ 23 ມັງກອນ 2019.

## ພາກທີ I

## ຫຼັກການ, ຂັ້ນຕອນ ແລະ ວິທີການ ອອກໃບອະນຸຍາດປຸກສ້າງ, ອາຄານ ແລະ ໂຮງງານ

### 1. ໃນເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ການອອກໃບອະນຸຍາດປຸກສ້າງ, ອາຄານ ແລະ ໂຮງງານ.

ການອອກໃບອະນຸຍາດປຸກສ້າງ, ອາຄານ ແລະ ໂຮງງານ ແມ່ນການອອກເອກະສານກ່ຽວກັບການຢັ້ງຢືນການອະນຸຍາດປຸກສ້າງ ພາຍໃນເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ໃຫ້ແກ່ບຸກຄົນ ແລະ ນິຕິບຸກຄົນພາຍໃນ ແລະ ຕ່າງປະເທດ ຕາມແບບແຜນກໍ່ສ້າງທີ່ ຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ໄດ້ຮັບຮອງຮ່ວມກັບຂະແໜງການທີ່ກ່ຽວຂ້ອງ ຕາມສັນຍາເຊົ່າທີ່ດິນ, ເອກະສານຢັ້ງຢືນສິດນຳໃຊ້ທີ່ດິນຈາກການຈັດຕັ້ງພາກລັດ, ທີ່ມີຈຸດປະສົງເຄື່ອນໄຫວກິດຈະການຢູ່ໃນເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ການບໍລິຫານ-ຄຸ້ມຄອງ ແລະ ການປົກປັກຮັກສາສະພາບແວດລ້ອມ ລວມທັງການເລີ່ມຕົ້ນກໍ່ສ້າງຈົນສຳເລັດ ຢ່າງເປັນເອກະພາບ. ຊຶ່ງເອກະສານອະນຸຍາດປຸກສ້າງ, ອາຄານ ແລະ ໂຮງງານ ຂອງຜູ້ລົງທຶນ ດັ່ງກ່າວ ແມ່ນຮັບຮອງ ແລະ ຢັ້ງຢືນ ໂດຍຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

### 2. ຄຳຮ້ອງຂໍຂຶ້ນທະບຽນອະນຸຍາດປຸກສ້າງ, ອາຄານ ແລະ ໂຮງງານ.

ບຸກຄົນ ແລະ ນິຕິບຸກຄົນພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງຂຶ້ນທະບຽນອະນຸຍາດປຸກສ້າງ, ອາຄານ ແລະ ໂຮງງານຕ່າງໆ ຢູ່ໃນເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ຕ້ອງຍື່ນຄຳຮ້ອງຂໍຂຶ້ນທະບຽນອະນຸຍາດ ແລະ ເອກະສານປະກອບຄົບຖ້ວນ ຕໍ່ໜ່ວຍງານບໍລິການການລົງທຶນປະຕູດຽວ, ຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນ ຫຼວງວຽງຈັນ ຕາມທີ່ລະບຸໄວ້ໃນ ແບບຟອມທີ 01 ແລະ 10 ຂອງປຶ້ມຄູ່ມືແນະນຳສະບັບນີ້.

### 3. ການກວດກາຄຳຮ້ອງຂໍຂຶ້ນທະບຽນອະນຸຍາດປຸກສ້າງ, ອາຄານ ແລະ ໂຮງງານ.

ພາຍຫຼັງທີ່ສຳນວນຄຳຮ້ອງຂໍຂຶ້ນທະບຽນ ໄດ້ຖືກມອບຮັບຈາກໜ່ວຍງານບໍລິການການລົງທຶນປະຕູດຽວ ແລ້ວຂະ ແໜງຮັບຜິດຊອບວຽກງານການລົງທຶນ ຕ້ອງກວດກາຄວາມຖືກຕ້ອງດ້ານເອກະສານປະກອບຂໍອະນຸຍາດ (ຖືກຕ້ອງຕາມຂໍ້ທີ 07 ຂອງຄູ່ມືສະບັບນີ້) ພ້ອມທັງນຳສົ່ງແບບກໍ່ສ້າງຫາຂະແໜງໂຍທາ ເພື່ອກວດກາຄວາມຖືກຕ້ອງດ້ານເຕັກນິກ, ກ່ອນການເປີດກອງປະຊຸມວິຊາການຜ່ານແບບປຸກສ້າງ ຮ່ວມກັບຂະແໜງການທີ່ກ່ຽວຂ້ອງ ພ້ອມທັງບັນທຶກກອງປະຊຸມ ແລະ ເຊັນຢັ້ງຢືນຄວາມຖືກຕ້ອງ ເພື່ອໃຫ້ຄະນະຄຸ້ມຄອງເຂດເສດຖະກິດພິເສດ ເປັນບ່ອນອີງໃນພິຈາລະນາອະນຸມັດ ອອກໃບອະນຸຍາດປຸກສ້າງ, ອາຄານ, ໂຮງງານ ແລະ ຢັ້ງຢືນແຜນຜັງກໍ່ສ້າງໃຫ້ກັບຜູ້ມາຂໍອະນຸຍາດປຸກສ້າງ.

### 4. ໃບອະນຸຍາດປຸກສ້າງ, ອາຄານ ແລະ ໂຮງງານ.

ໃບອະນຸຍາດປຸກສ້າງ, ອາຄານ ແລະ ໂຮງງານ ແມ່ນເອກະສານທີ່ເປັນຫຼັກຖານຕົ້ນຕໍ ກ່ຽວກັບການຢັ້ງຢືນ ແລະ ອະນຸຍາດ ຢ່າງເປັນທາງການພາຍໃນເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ເພື່ອມອບໃຫ້ແກ່ຜູ້ເປັນເຈົ້າຂອງທີ່ໄດ້ຮັບອະນຸຍາດປຸກສ້າງ, ອາຄານ ແລະ ໂຮງງານ ພຽງໃບດຽວເກັບຮັກສາໄວ້ເປັນຫຼັກຖານ ຈົນກວ່າຈະມີການປ່ຽນແປງ, ດັດແກ້ ແລະ ປ່ຽນແທນ ຕາມເງື່ອນໄຂທີ່ກຳນົດໄວ້ໃນລະບຽບກົດໝາຍ.

## 5. ຂອບເຂດອາຍຸການຂອງໃບອະນຸຍາດປຸກສ້າງ, ອາຄານ ແລະ ໂຮງງານ.

ຂອບເຂດກຳນົດເວລາຂອງໃບອະນຸຍາດປຸກສ້າງຂອງຜູ້ລົງທຶນ ຫຼື ຜູ້ທີ່ໄດ້ຮັບອະນຸຍາດ ຈາກຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ແມ່ນນຳໃຊ້ພາຍໃນກຳນົດໄລຍະເວລາ 1 ປີ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ຫຼັງຈາກນັ້ນ, ຄົບກຳນົດອະນຸຍາດ 1 ປີ ຖ້າຫາກການປຸກສ້າງບໍ່ທັນສຳເລັດ ແມ່ນໃຫ້ຜູ້ລົງທຶນປະກອບເອກະສານຄົບຖ້ວນເພື່ອຂໍຕໍ່ໃບອະນຸຍາດ ແລ້ວຍື່ນໜັງສືສະເໜີມາຍັງ ໜ່ວຍງານບໍລິການການລົງທຶນປະຕູດຽວ ປະຈຳເຂດ, ຈາກນັ້ນໜ່ວຍງານຮັບຜິດຊອບ ຄົ້ນຄວ້າ ແລ້ວນຳສະເໜີຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ພິຈາລະນາອະນຸມັດຮັບຮອງຕໍ່ໃບອະນຸຍາດດັ່ງກ່າວຕາມລະບຽບການ. ຖ້າການປຸກສ້າງສຳເລັດແລ້ວ ແມ່ນໃຫ້ຜູ້ອະນຸຍາດຍື່ນໜັງສືສະເໜີຂໍໃບຢັ້ງຢືນປຸກສ້າງຈາກ ຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ເພື່ອລົງກວດກາຄວາມສຳເລັດຂອງການປຸກສ້າງ ແລະ ອອກໃບຢັ້ງຢືນປຸກສ້າງໃຫ້ແກ່ຜູ້ຂໍອະນຸຍາດ.

## 6. ປື້ມບັນທຶກ ກ່ຽວກັບອະນຸຍາດປຸກສ້າງ, ອາຄານ ແລະ ໂຮງງານ.

ປື້ມບັນທຶກທະບຽນການອະນຸຍາດປຸກສ້າງ, ອາຄານ ແລະ ໂຮງງານ ພາຍໃນເຂດເສດຖະກິດພິເສດ ນະຄອນ ຫຼວງວຽງຈັນ ແມ່ນປື້ມທີ່ໃຊ້ຈົດກ່າຍເລກລຳດັບ ແລະ ຂໍ້ມູນລະອຽດຂອງແບບການກໍ່ສ້າງ ໃນນັ້ນ, ປື້ມທະບຽນອະນຸ ຍາດປຸກສ້າງ, ອາຄານ ແລະ ໂຮງງານ ຕ້ອງປະກອບມີລາຍເຊັນ ແລະ ຕາປະທັບຂອງ ຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ.

ລາຍລະອຽດຂອງປື້ມບັນທຶກທະບຽນອະນຸຍາດປຸກສ້າງ, ອາຄານ ແລະ ໂຮງງານ ຕ້ອງມີເນື້ອໃນ ດັ່ງນີ້:

- ຊື່ ແລະ ນາມສະກຸນ ຂອງບຸກຄົນ ຫຼື ນິຕິບຸກຄົນ ພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຮັບສິດອະນຸຍາດປຸກສ້າງ;
- ວັນ, ເດືອນ, ປີເກີດ, ສັນຊາດ, ອາຊີບ, ທີ່ຢູ່ປັດຈຸບັນ ຂອງຜູ້ທີ່ໄດ້ຮັບອະນຸຍາດປຸກສ້າງ;
- ເລກທີແຜນຜັງ ຫຼື ແບບກໍ່ສ້າງ (ຕາມທີ່ກຳນົດໄວ້ໃນແຜນແມ່ບົດການພັດທະນາ ແລະ ຕາມສັນຍາການຮັບ ເ ໝົາກໍ່ສ້າງຮ່ວມກັບຜູ້ພັດທະນາເຂດ);
- ເລກທີແບບລວມກໍ່ສ້າງ, ຂອບເຂດ, ທີ່ຕັ້ງ, ປະເພດການກໍ່ສ້າງ ແລະ ຈຳນວນເນື້ອທີ່ປຸກສ້າງ;
- ເລກທີໃບຢັ້ງຢືນອະນຸຍາດປຸກສ້າງ.

## 7. ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງຜູ້ທີ່ໄດ້ຮັບອະນຸຍາດປຸກສ້າງ.

ບຸກຄົນ ຫຼື ນິຕິບຸກຄົນ ພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຮັບອະນຸຍາດປຸກສ້າງ ຕ້ອງໄດ້ປະຕິບັດດັ່ງນີ້:

- ຈ່າຍຄ່າທຳນຽມອະນຸຍາດປຸກສ້າງ ຕາມກົດໝາຍ ແລະ ລະບຽບການສະເພາະຂອງຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ກຳນົດອອກ;
- ແຈ້ງມື້ຈະລົງມືກໍ່ສ້າງຕົວຈິງ ໃຫ້ຜູ້ພັດທະນາເຂດຮັບຊາບ ໂດຍຜ່ານຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ແລະ ຕິດຕັ້ງປ້າຍບອກຂໍ້ມູນກ່ຽວກັບກິດຈະການການປຸກສ້າງ ຢູ່ດ້ານໜ້າ ຫຼື ບ່ອນທີ່ສາມາດເຫັນໄດ້ງ່າຍ ໃນສະຖານທີ່ປຸກສ້າງ;
- ສົມທົບກັບຜູ້ພັດທະນາເຂດ ປະຕິບັດມາດຕະການປ້ອງກັນຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍ ແລະ ສະພາບແວດລ້ອມ ພາຍໃນພື້ນທີ່ມີການກໍ່ສ້າງ ແລະ ນອກສະຖານທີ່ ຕາມລະບຽບກົດໝາຍ ຫຼື ລະບຽບການສະເພາະຂອງເຂດກຳນົດໄວ້;
- ດຳເນີນການປຸກສ້າງໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມແບບ ທີ່ຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນ ຫຼວງວຽງຈັນ ໄດ້ອອກອະນຸຍາດ ແລະ ບົດບັນທຶກຜົນການກວດກາແຕ່ໄລຍະ ;
- ກໍລະນີຫາກມີການດັດແປງ ຫຼື ເພີ່ມເຕີມແບບກໍ່ສ້າງ ຕ້ອງໄດ້ສົມທົບຜູ້ພັດທະນາເຂດ ແລ້ວໃຫ້ນຳສະເໜີມາຍັງຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ພິຈາລະນາອະນຸມັດຮັບຮອງຕາມລະບຽບການ;

- ອຳນວຍຄວາມສະດວກ ແລະ ໃຫ້ຄວາມຮ່ວມມືໂດຍສະເພາະແມ່ນຕ້ອງແຈ້ງ, ສະໜອງຂໍ້ມູນຂ່າວສານ ຫຼື ເອກະສານຕ່າງໆໃຫ້ຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ຮັບຊາບ ໂດຍຜ່ານຜູ້ພັດທະນາເຂດ ເພື່ອກະກຽມໃຫ້ຄະນະກຳມະການກວດກາ ແລະ ປະເມີນໂຄງການປຸກສ້າງ ຮ່ວມກັບເຈົ້າໜ້າທີ່ຂະແໜງ ການທີ່ກ່ຽວຂ້ອງ ເພື່ອລົງຕິດຕາມ, ກວດກາ ໃນແຕ່ໄລຍະ ທີ່ດຳເນີນ ແລະ ຈົບສຳເລັດການປຸກສ້າງ.

## 8. ການຕິດຕາມກວດກາການປຸກສ້າງ.

ການຕິດຕາມການການປຸກສ້າງ ແມ່ນການລົງກວດກາໃນເວລາຈັດຕັ້ງປະຕິບັດໂຄງການປຸກສ້າງ ເພື່ອຄວບຄຸມການປຸກສ້າງໃຫ້ເປັນໄປຕາມການອະນຸມັດ, ຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ແລະ ຂະແໜງ ການທີ່ກ່ຽວຂ້ອງຕ້ອງລົງກວດກາຢ່າງໜ້ອຍສາມຄັ້ງຄື: ກວດກາໄລຍະຕົ້ນ, ໄລຍະກາງ ແລະ ໄລຍະທ້າຍ.

ການລົງກວດກາແຕ່ລະຄັ້ງ ຕ້ອງໄດ້ເຮັດບົດບັນທຶກຜົນການກວດກາ ແລະ ປຶກສາຫາລືກ່ຽວກັບການດັດແກ້ແບບແຜນຜັງ (ຖ້າມີ) ຮ່ວມກັບຜູ້ໄດ້ຮັບອະນຸຍາດປຸກສ້າງ ຫຼື ຜູ້ຕາງໜ້າທີ່ໄດ້ຮັບການມອບສິດເພື່ອໃຊ້ເປັນຫຼັກຖານ ຫຼື ບ່ອນອີງໃຫ້ແກ່ການພິຈາລະນາອອກໃບຢັ້ງຢືນຄວາມສຳເລັດຂອງສິ່ງປຸກສ້າງ.

## 9. ເງື່ອນໄຂຂອງຜູ້ສະເໜີ ຂໍອະນຸຍາດປຸກສ້າງ, ອາຄານ ແລະ ໂຮງງານ.

- ຕ້ອງເປັນບຸກຄົນ, ນິຕິບຸກຄົນພາຍໃນ ແລະ ຕ່າງປະເທດ;
- ມີໃບແຈ້ງໂທດເລກທີ 3 (ສະເພາະຄົນລາວ);
- ຕ້ອງແມ່ນຜູ້ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດ (ໃບທະບຽນວິສາຫະກິດ) ແລະ ຕ້ອງນອນໃນເຂດເສດຖະກິດພິເສດນະຄອນຫຼວງວຽງຈັນ;
- ມີເອກະສານຢັ້ງຢືນສິດນຳໃຊ້ທີ່ດິນ ແລະ/ຫຼື ເອກະສານຢັ້ງຢືນໃຫ້ນຳໃຊ້ທີ່ດິນ ບ່ອນທີ່ດຳເນີນໂຄງການກໍ່ສ້າງ ໂດຍສອດຄ່ອງກັບແຜນແມ່ບົດການພັດທະນາລວມຂອງເຂດ;
- ມີເອກະສານການສຳຫຼວດ, ອອກແບບ ແລະ ຜ່ານແບບທີ່ໄດ້ຜ່ານການຮັບຮອງຢ່າງຖືກຕ້ອງ ຈາກບໍລິສັດອອກແບບທີ່ມີໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດ ຈາກຂະແໜງການທີ່ກ່ຽວຂ້ອງ, ພ້ອມທັງປະຕິບັດພັນທະອາກອນຕ່າງໆ ປະຈຳປີ ຢ່າງຖືກຕ້ອງ ຕາມທີ່ລະບຸໄວ້ໃນລະບຽບກົດໝາຍ;
- ມີຖານະທາງດ້ານການເງິນ.

## 1. ເອກະສານປະກອບເພື່ອຂໍໃບຢັ້ງຢືນສິ່ງປຸກສ້າງ.

- ຄຳຮ້ອງສະເໜີຂໍອະນຸຍາດປຸກສ້າງ (ແບບຟອມ 1);
- ສຳເນົາໃບທະບຽນວິສາຫະກິດ;
- ໃບທະບຽນອາກອນ ແລະ ໃບຢັ້ງຢືນການເສຍອາກອນປະຈຳປີ;
- ໃບອະນຸຍາດເຊົ່າສິດໃຊ້ທີ່ດິນ;
- ແຜນຜັງທີ່ດິນທີ່ຕັ້ງຂອງສະຖານທີ່ຈະປຸກສ້າງ ຂະໜາດ A3;
- ແຜນຜັງສະຖາປັດຕະຍະກຳ ແລະ ເຕັກນິກ ຂະໜາດ A3 ພ້ອມແຜ່ນ CD ຂໍ້ມູນ;
- ໃບຄິດໄລ່ລາຄາການປຸກສ້າງອາຄານ, ແຜນການດຳເນີນການປຸກສ້າງ (ປະກອບເອກະສານຈຳນວນ 03 ຊຸດ);
- ໃບຢັ້ງຢືນການອອກແບບ ແລະ ແບບເຕັກນິກການກໍ່ສ້າງຄົບຊຸດ ຂອງ ບໍລິສັດ ອອກແບບ ແລະ ກໍ່ສ້າງ;
- ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມຂອງການກໍ່ສ້າງ (ກໍລະນີເປັນໂຄງການ ລະດັບກາງຫາສູງ);
- ສັນຍາຮັບເໝົາກໍ່ສ້າງ ລະຫວ່າງ ຜູ້ຮັບເໝົາ ກັບ ເຈົ້າຂອງໂຄງການ;

- ໃບມອບສິດ (ຜູ້ດຳເນີນແລ່ນເອກະສານ ແບບຟອມ 2);
- ໃບອະນຸຍາດດຳເນີນທຸລະກິດການກໍ່ສ້າງບໍລິສັດຜູ້ຮັບເໝົາ ຈາກຂະແໜງການ ຫຼື ເອກະສານອື່ນໆກ່ຽວຂ້ອງ.

## 2. ຂັ້ນຕອນໃນການພິຈາລະນາຮັບຮອງ.

- ພາຍຫຼັງທີ່ຜູ້ລົງທຶນໄດ້ຕົກລົງເຫັນດີ ກ່ຽວກັບແບບການກໍ່ສ້າງ, ຈຸດທີ່ຕັ້ງ, ມູນຄ່າລວມຂອງການກໍ່ສ້າງ, ໄລຍະເວລາການກໍ່ສ້າງ, ຮູບແບບການຊຳລະ ແລະ ຕົກລົງເຊັນສັນຍາຮັບເໝົາການກໍ່ສ້າງຮ່ວມກັບຜູ້ພັດທະນາ;
- ຜູ້ລົງທຶນຍື່ນໃບຄຳຮ້ອງຂໍອະນຸຍາດການກໍ່ສ້າງ (ຜ່ານແບບປຸກສ້າງ) ພ້ອມດ້ວຍເອກະສານປະກອບທີ່ກ່ຽວຂ້ອງຄົບຖ້ວນ (ຕາມທີ່ລະບຸໄວ້ໃນຂໍ້ທີ 07 ຂອງຄູ່ມືສະບັບນີ້) ຢູ່ໜ່ວຍງານບໍລິການການລົງທຶນປະຕູດຽວ ຂອງຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ;
- ໜ່ວຍງານຮັບຜິດຊອບການລົງທຶນ, ຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ກວດຄືນເອກະສານຢ່າງຄົບຖ້ວນ ພ້ອມທັງນຳສົ່ງໃຫ້ຂະແໜງການກ່ຽວຂ້ອງກ່ອນ ເພື່ອກວດກາແບບກໍ່ສ້າງຄວາມຖືກຕ້ອງທາງດ້ານເຕັກນິກ ຫຼັງຈາກນັ້ນ, ກະກຽມຈັດກອງປະຊຸມຮ່ວມ (ຜ່ານແບບປຸກສ້າງ) ຮ່ວມກັບຂະແໜງການພາຍໃນ 07 ວັນລັດຖະການ. ກໍລະນີຫາກມີການປັບປຸງ (ຜູ້ລົງທຶນ) ຈະຕ້ອງໄດ້ນຳໄປດັດແກ້ ຕາມບົດບັນທຶກກອງປະຊຸມ ແລ້ວນຳສະເໜີຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ພິຈາລະນາຮັບຮອງ ຕາມລະບຽບການ;
- ແຕ່ງຕັ້ງຄະນະຕິດຕາມການປຸກສ້າງ ເປັນຕົ້ນແມ່ນ ຕາງໜ້າຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງ ວຽງຈັນ, ຂະແໜງສົ່ງເສີມການລົງທຶນ, ຕາງໜ້າບໍລິສັດຜູ້ພັດທະນາ ແລະ ຜູ້ທີ່ໄດ້ຮັບການອະນຸຍາດປຸກສ້າງ ຮ່ວມກັນ ລົງກວດກາຈຸດພື້ນທີ່ກໍ່ສ້າງຕົວຈິງ ໃຫ້ສອດຄ່ອງກັບແບບກໍ່ສ້າງ ທີ່ໄດ້ຮັບຮອງແລ້ວ. ພ້ອມນັ້ນ, ຈະມີການລົງຕິດຕາມກວດກາເປັນແຕ່ໄລຍະ ຈົນສຳເລັດໂຄງການ;
- ຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ພິຈາລະນາອະນຸມັດ ອອກໃບອະນຸຍາດປຸກສ້າງ ຫລື ປະຕິເສດ ຈະໄດ້ແຈ້ງໃຫ້ຜູ້ລົງທຶນຮັບຊາບ ພາຍໃນ 03 ວັນລັດຖະການ.

( ຂັ້ນຕອນຂໍຂື້ນທະບຽນອະນຸຍາດປຸກສ້າງ, ອາຄານ ແລະ ໂຮງງານ )



## ພາກທີ II
## ຫຼັກການ, ຂັ້ນຕອນ ແລະ ວິທີການ ອອກໃບຢັ້ງຢືນສິ່ງປຸກສ້າງ, ອາຄານ ແລະໂຮງງານ ໃນເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ

### 3. ການອອກໃບຢັ້ງຢືນສິ່ງປຸກສ້າງ, ອາຄານ ແລະ ໂຮງງານ.

ພາຍຫຼັງສິ່ງປຸກສ້າງສຳເລັດແລ້ວ ຜູ້ທີ່ໄດ້ຮັບອະນຸຍາດປຸກສ້າງ, ອາຄານ ແລະ ໂຮງງານ ຕ້ອງແຈ້ງໃຫ້ຄະນະຄຸ້ມຄອງເຂດ ໂດຍຜ່ານການປະສານສົມທົບກັບຜູ້ພັດທະນາເຂດ ຮ່ວມກັບຜູ້ທີ່ໄດ້ຮັບອະນຸຍາດປຸກສ້າງ ເພື່ອລົງກວດກາໄລຍະທ້າຍ ໂດຍມີການເຂົ້າຮ່ວມຂອງຂະແໜງການທີ່ກ່ຽວຂ້ອງ. ຫຼັງຈາກການກວດກາສຳເລັດແລ້ວ ໜ່ວຍງານຮັບຜິດຊອບ ຄົ້ນຄວ້າ ແລະ ກວດກາດ້ານເອກະສານ ນຳສະເໜີຕໍ່ຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ພິຈາລະນາຮັບຮອງ ອອກໃບຢັ້ງຢືນສິ່ງປຸກສ້າງ ຕາມຂອບເຂດສິດ ແລະ ພາລະບົດບາດ ພາຍໃນ 05 ວັນລັດຖະການ.

### 4. ຄຳຮ້ອງຂໍອອກໃບຢັ້ງຢືນສິ່ງປຸກສ້າງ, ອາຄານ ແລະ ໂຮງງານ.

ບຸກຄົນ, ນິຕິບຸກຄົນພາຍໃນ ແລະ ຕ່າງປະເທດ ຫຼື ຜູ້ທີ່ໄດ້ຮັບອະນຸຍາດປຸກສ້າງ ທີ່ມີຈຸດປະສົງຂໍອອກໃບຢັ້ງຢືນສິ່ງປຸກສ້າງ, ອາຄານ ແລະ ໂຮງງານ ຢູ່ໃນເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ຕ້ອງຍື່ນຄຳຮ້ອງຕໍ່ໜ່ວຍງານບໍລິການການລົງທຶນປະຕູດຽວ, ຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ຕາມທີ່ລະບຸໄວ້ໃນແບບ ຟອມທີ 06 ຂອງຄູ່ມືແນະນຳສະບັບນີ້.

### 5. ການກວດກາຄຳຮ້ອງຂໍອອກໃບຢັ້ງຢືນສິ່ງປຸກສ້າງ, ອາຄານ ແລະ ໂຮງງານ

ພາຍຫຼັງທີ່ສຳນວນຄຳຮ້ອງຂໍອອກໃບຢັ້ງຢືນສິ່ງປຸກສ້າງ, ອາຄານ ແລະ ໂຮງງານ ໄດ້ຖືກມອບຮັບຈາກໜ່ວຍງານບໍລິການການລົງທຶນປະຕູດຽວແລ້ວ ຂະແໜງຮັບຜິດຊອບກວດກາຄວາມຖືກຕ້ອງ ດ້ານເອກະສານປະກອບ (ຕາມຂໍ້ທີ 07 ຂອງຄູ່ມືສະບັບນີ້) ແລ້ວນຳສະເໜີຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ພິຈາລະນາອະນຸມັດ ອອກໃບຢັ້ງຢືນສິ່ງປຸກສ້າງ, ອາຄານ ແລະ ໂຮງງານ ໃຫ້ກັບຜູ້ລົງທຶນຕາມລະບຽບການ.

### 6. ໃບຢັ້ງຢືນສິ່ງປຸກສ້າງ, ອາຄານ ແລະ ໂຮງງານ

ໃບຢັ້ງຢືນສິ່ງປຸກສ້າງ, ອາຄານ ແລະ ໂຮງງານ ແມ່ນເອກະສານທີ່ເປັນຫຼັກຖານຕົ້ນຕໍ ກ່ຽວກັບການຢັ້ງຢືນ ແລະ ອະນຸຍາດສະເພາະ ສິ່ງປຸກສ້າງທີ່ສຳເລັດ ແລະ ຖືກຕ້ອງ ຢ່າງເປັນທາງການ ພາຍໃນເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ເພື່ອມອບໃຫ້ແກ່ຜູ້ລົງທຶນເຈົ້າຂອງໂຄງການທີ່ໄດ້ຮັບອະນຸຍາດປຸກສ້າງ, ອາຄານ ແລະ ໂຮງງານ ພຽງໃບດຽວ ເກັບຮັກສາໄວ້ເປັນຫຼັກຖານ ຈົນກວ່າຈະມີການປ່ຽນແປງ, ດັດແກ້ ແລະ ປ່ຽນແທນ ຕາມເງື່ອນໄຂທີ່ກຳນົດໄວ້ໃນລະບຽບກົດໝາຍ. ສຳລັບຂອບເຂດການນຳໃຊ້ໃບຢັ້ງຢືນສິ່ງປຸກສ້າງ ແມ່ນມີອາຍຸການນຳໃຊ້ຈົນກວ່າສິ່ງປຸກສ້າງຈະເຊື່ອມຄຸນນະພາບ ນັບແຕ່ມື້ລົງລາຍເຊັນຮັບຮອງໄປຕົ້ນໄປ.

### 7. ປື້ມບັນທຶກ ກ່ຽວກັບໃບຢັ້ງຢືນສິ່ງປຸກສ້າງ, ອາຄານ ແລະ ໂຮງງານ

ປື້ມບັນທຶກທະບຽນໃບຢັ້ງຢືນສິ່ງປຸກສ້າງ, ອາຄານ ແລະ ໂຮງງານ ພາຍໃນເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ແມ່ນປື້ມທີ່ໃຊ້ຈົດກ່າຍ ເລກລຳດັບ, ຂໍ້ມູນລະອຽດຂອງໃບອະນຸຍາດສິ່ງປຸກສ້າງ ແລະ ບົດບັນທຶກການລົງກວດກາແຕ່ລະຄັ້ງ.ໃນນັ້ນ, ປື້ມບັນທຶກທະບຽນໃບຢັ້ງຢືນສິ່ງປຸກສ້າງ, ອາຄານ ແລະ ໂຮງງານ ຕ້ອງປະກອບມີລາຍເຊັນ ແລະ ຕາປະທັບຂອງຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ.

ລາຍລະອຽດຂອງປື້ມບັນທຶກທະບຽນໃບຢັ້ງຢືນສິ່ງປຸກສ້າງ, ອາຄານ ແລະ ໂຮງງານ ຕ້ອງມີເນື້ອໃນ ດັ່ງນີ້:

- ຊື່ ແລະ ນາມສະກຸນ ຂອງບຸກຄົນ ຫຼື ນິຕິບຸກຄົນ ພາຍໃນ ແລະ ຕ່າງປະເທດ ຜູ້ທີ່ໄດ້ຮັບໃບຢັ້ງຢືນສິ່ງປຸກສ້າງ;
- ວັນ, ເດືອນ, ປີເກີດ, ສັນຊາດ, ອາຊີບ, ທີ່ຢູ່ປັດຈຸບັນ ຂອງຜູ້ທີ່ຈະໄດ້ຮັບໃບຢັ້ງຢືນສິ່ງປຸກສ້າງ;
- ເລກທີ, ລົງວັນທີ ຂອງ ບົດບັນທຶກການລົງກວດກາແຕ່ລະຄັ້ງ ຫຼື ເອກະສານອື່ນໆ ທີ່ກ່ຽວຂ້ອງ;
- ເລກທີໃບຢັ້ງຢືນສິ່ງກໍ່ສ້າງ, ຂອບເຂດ, ທີ່ຕັ້ງ, ປະເພດການກໍ່ສ້າງ ແລະ ຈຳນວນເນື້ອທີ່ປຸກສ້າງ.

### 8. ເງື່ອນໄຂຂອງຜູ້ສະເໜີ ຂໍໃບຢັ້ງຢືນສິ່ງປຸກສ້າງ, ອາຄານ ແລະ ໂຮງງານ.

- ຕ້ອງເປັນບຸກຄົນ, ນິຕິບຸກຄົນພາຍໃນ ແລະ ຕ່າງປະເທດ;
- ຕ້ອງແມ່ນຜູ້ທີ່ໄດ້ຮັບອະນຸຍາດປຸກສ້າງ ແລະ ຕ້ອງນອນໃນເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ;
- ມີເອກະສານຢັ້ງຢືນສິດນຳໃຊ້ທີ່ດິນ ແລະ/ຫຼື ເອກະສານຢັ້ງຢືນໃຫ້ນຳໃຊ້ທີ່ດິນ ບ່ອນທີ່ດຳເນີນໂຄງການກໍ່ສ້າງ ໂດຍສອດຄ່ອງກັບແຜນແມ່ບົດການພັດທະນາລວມຂອງເຂດ.

## 9. ເອກະສານປະກອບເພື່ອຂໍໃບຢັ້ງຢືນສິ່ງປຸກສ້າງ.

- ຄໍາຮ້ອງຂໍອະນຸຍາດອອກໃບຢັ້ງຢືນສິ່ງປຸກສ້າງ (ແບບຟອມ 5);
- ໃບອະນຸຍາດປຸກສ້າງ;
- ສັນຍາຮັບເໝົາກໍ່ສ້າງ ລະຫວ່າງ ເຈົ້າຂອງໂຄງການ ແລະ ບໍລິສັດ ຮັບເໝົາປຸກສ້າງ;
- ປຶດບັນທຶກການລົງກວດກາຄວາມສໍາເລັດຂອງການກໍ່ສ້າງ (ປຶດບັນທຶກກວດກາ ແລະ ຢັ້ງຢືນຂອງຄະນະກໍາມະ ການຮັບຜິດຊອບກວດກາ ແຕ່ລະໄລຍະ)
- ສັນຍາຮັບເໝົາເຊົ່າສໍາປະທານດິນ ລະຫວ່າງ ບໍລິສັດຜູ້ລົງທຶນ ກັບ ຜູ້ພັດທະນາເຂດ;
- ໃບມອບສິດ (ຜູ້ດໍາເນີນແລ່ນເອກະສານ ແບບຟອມ 2).

## 10. ຂັ້ນຕອນໃນການພິຈາລະນາຮັບຮອງ.

- ພາຍຫຼັງທີ່ ດໍາເນີນການປຸກສ້າງສໍາເລັດ, ເຈົ້າຂອງໂຄງການ ແລະ ຜູ້ຮັບເໝົາປຸກສ້າງ, ຕ້ອງໄດ້ເຮັດບົດລາຍງານຄວາມສໍາເລັດຂອງການປຸກສ້າງ ໃຫ້ຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ໂດຍຜ່ານຜູ້ພັດທະນາເຂດ ພາຍໃນ **30** ວັນ;
- ຍື່ນໃບຄໍາຮ້ອງຂໍອະນຸຍາດອອກໃບຢັ້ງຢືນສິ່ງປຸກສ້າງ ພ້ອມດ້ວຍເອກະສານປະກອບທີ່ກ່ຽວຂ້ອງ ຖືກຕ້ອງຄົບ ຖ້ວນ (ຕາມທີ່ລະບຸໄວ້ໃນຂໍ້ທີ 18 ຂອງຄູ່ມືສະບັບນີ້) ຢູ່ໜ່ວຍງານບໍລິການການລົງທຶນປະຕູດຽວ ຂອງຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ;
- ໜ່ວຍງານຮັບຜິດຊອບການລົງທຶນ, ກວດຄືນຄວາມຖືກຕ້ອງຄົບຖ້ວນ ດ້ານເອກະສານປະກອບ ແລະ ຫຼັງຈາກນັ້ນ, ອອກໜັງສືຫາຂະແໜງການກ່ຽວຂ້ອງ ເພື່ອເຂົ້າຮ່ວມລົງກວດກາ ແລະ ຢັ້ງຢືນສິ່ງປຸກສ້າງ ຄວາມຖືກຕ້ອງທາງດ້ານເຕັກນິກ ຕາມລະບຽບກົດໝາຍ, ພ້ອມທັງສ້າງບັນທຶກຮ່ວມກັບຜູ້ລົງທຶນທີ່ໄດ້ຮັບອະນຸຍາດປຸກສ້າງ ພາຍໃນ **07** ວັນລັດຖະການ. ກໍລະນີຜົນຂອງການກວດກາຫາກມີການປັບປຸງ (ຜູ້ທີ່ໄດ້ຮັບອະນຸຍາດ) ຈະຕ້ອງໄດ້ນໍາໄປດັດແກ້ ຫຼື ເພີ່ມເຕີມ ຕາມບົດບັນທຶກລົງກວດກາຂອງຄະນະກໍາມະການ (ຕາມຂໍ້ມູນຕົວຈິງ ແລະ ໃຫ້ສໍາເລັດຕາມເວລາທີ່ເໝາະສົມ).
- ໜ່ວຍງານຮັບຜິດຊອບ ອອກໃບຢັ້ງຢືນສິ່ງປຸກສ້າງ (ຕາມແບບຟອມ 05 ຕາມຄູ່ມືສະບັບນີ້) ເພື່ອສະເໜີຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ພິຈາລະນາຮັບຮອງ ພາຍໃນ **03** ວັນລັດຖະການ, ພ້ອມທັງບັນທຶກເຂົ້າໃນປຶ້ມບັນທຶກຂໍຂຶ້ນທະບຽນ. ກໍລະນີອະນຸມັດ ຫຼື ປະຕິເສດ ແມ່ນຈະແຈ້ງໃຫ້ຜູ້ທີ່ໄດ້ອະນຸຍາດຮັບຊາບ ພາຍໃນ **03** ວັນລັດຖະການ ຕາມລະບຽບການ.

9. ຂັ້ນຕອນການຂໍໃບຢັ້ງຢືນສິ່ງປຸກສ້າງ, ອາຄານ ແລະ ໂຮງງານ



## ພາກທີ III

## ຄຳຮ້ອງຂໍອະນຸຍາດ ແລະ ແບບຟອມຕ່າງໆ ກ່ຽວກັບການຂໍອອກໃບຢັ້ງຢືນສິ່ງປຸກສ້າງ, ອາຄານ ແລະ ໂຮງງານ ໃນເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ

### 1. ໃບຄຳຮ້ອງຂໍອະນຸຍາດປຸກສ້າງ,ອາຄານ ແລະ ໂຮງງານ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຊື່ວິສາຫະກິດ.......................... ເລກທີ:.........../.........

### ຄຳຮ້ອງ

### ຂໍອະນຸຍາດປຸກສ້າງ, ອາຄານ ແລະ ໂຮງງານ

**ຮຽນ:** ທ່ານຫົວໜ້າຄະນະຄຸ້ມຄອງເຂດເສດຖະກິດພິເສດ......................ທີ່ນັບຖືຢ່າງສູງ.

**ເລື່ອງ:** ຂໍອະນຸຍາດປຸກສ້າງ, ອາຄານ ແລະ ໂຮງງານ (ຜ່ານແບບປຸກສ້າງ).

ຂ້າພະເຈົ້າຊື່..................................ນາມສະກຸນ.. ...........................ອາຍຸ.................ປີ ທະບຽນວິສາຫະກິດເລກທີ.................ລົງວັນທີ.................ທີ່ຕັ້ງສຳນັກງານເຂດ.............................ເມືອງ......... ..................... ແຂວງ.. ............................ເບີໂທລະສັບ...... ...............ຖືບັດປະຈຳຕົວເລກທີ..... .....................ລົງວັນທີ....../....../..............., ອອກໃຫ້ທີ່.......... ........................ປື້ມສຳມະໂນຄົວເລກທີ........... ລົງວັນທີ......./......../............, ໜັງສືຜ່ານແດນເລກທີ .........................ລົງວັນທີ.............................ອອກໃຫ້ທີ່.........................

ມີຈຸດປະສົງຂໍອະນຸຍາດປຸກສ້າງ☐ , ອາຄານ☐ ແລະ ໂຮງງານ.....ແລະ/ຫຼື ສ້ອມແປງ☐ ຮື້ຖອນ☐ .................ຕອນດິນເລກທີ:..............ເນື້ອທີ່:...........ເຮັກຕາ.................ໃນເຂດ..................ຊຶ່ງມີລາຍລະອຽດດັ່ງນີ້.

1. ເປັນອາຄານ ( ລະບຸຊະນິດຂອງໂຄງສ້າງ, ຈຳນວນຫຼັງ, ປະໂຫຍດນຳໃຊ້)
   - ຊະນິດ..............................ຈຳນວນ..........ຫຼັງ..........ເພື່ອໃຊ້ເປັນ..............................
   - ຊະນິດ..............................ຈຳນວນ..........ຫຼັງ..........ເພື່ອໃຊ້ເປັນ..............................
   - ຊະນິດ..............................ຈຳນວນ..........ຫຼັງ..........ເພື່ອໃຊ້ເປັນ..............................
   - ຊະນິດ..............................ຈຳນວນ..........ຫຼັງ..........ເພື່ອໃຊ້ເປັນ..............................
2. ບໍລິສັດກໍ່ສ້າງ;.........................................................................................ຊຶ່ງປະກອບມີ:
   - ສະຖາປານິກອອກແບບ/ຜູ້ອອກແບບ ທ່ານ.......................................................................
   - ວິສະວະກອນ/ຜູ້ຄິດໄລ່ໂຄງສ້າງ ທ່ານ...........................................................................
   - ວິສະວະກອນ/ຜູ້ຄຸມງານທ່ານ.......................................................................................
3. ໄລຍະເວລາການກໍ່ສ້າງສຳເລັດພາຍໃນ.............ວັນ ນັບແຕ່ວັນໄດ້ຮັບອະນຸຍາດ..........................
4. ຄວາມຕ້ອງການສາທາລະນຸປະໂພກ ແລະ ສິ່ງອຳນວຍສະດວກຕ່າງໆ:

| ປະເພດ | ໄລຍະເລີ່ມຕົ້ນກໍ່ສ້າງ<br>......./......./.......... | ໄລຍະດຳເນີນການຜະລິດ<br>........./........./............. |
|---|---|---|
| 1. ໄຟຟ້າ<br>2. ໂທລະສັບ<br>3. ນ້ຳປະປາ<br>4. ນ້ຳດິບ<br>5. ການບຳບັດນ້ຳເສຍ<br>6. ການຈຳກັດສິ່ງເສດເຫຼືອຂອງຜະລິດ<br>7. ອື່ນໆ | ........................<br>........................<br>.......ແມັດກ້ອນ/ວັນ<br>.......ແມັດກ້ອນ/ວັນ<br>.......ແມັດກ້ອນ/ວັນ<br>x<br>......................... | ........................<br><br>.......ແມັດກ້ອນ/ວັນ<br>.......ແມັດກ້ອນ/ວັນ<br>.......ແມັດກ້ອນ/ວັນ<br>.......ແມັດກ້ອນ/ວັນ<br>.......ໂຕນ/ວັນ<br>...................... |
| | | |

ຂ້າພະເຈົ້າ ໃຫ້ຄຳໝັ້ນສັນຍາວ່າຈະປະຕິບັດ ຕາມກົດໝາຍວ່າດ້ວຍການກໍ່ສ້າງໃຫ້ຖືກຕ້ອງ ຕາມມາດຕະຖານເຕັກນິກ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ ຢ່າງເຂັ້ມງວດ.

ດັ່ງນັ້ນ, ຈຶ່ງສະເໜີມາຍັງທ່ານເພື່ອພິຈາລະນາຕາມທີ່ເຫັນຄວນ.

ທີ່.........................., ວັນທີ......../......./.........

**ລາຍເຊັນຜູ້ຮ້ອງຂໍ**

__**ເອກະສານຄັດຕິດ:**__

- ແຜນຜັງບໍລິເວນ, ສະຖາປັດ **ແບບສະຖາປານິກ,** ແບບວິສະວະກຳໄຟ້າ, ແບບສຸຂະພິບານ ແລະ ອື່ນໆ ຈຳນວນ 1 ຊຸດ;
- ໃບອະນຸຍາດສິດນຳໃຊ້ທີ່ດິນ 1ສະບັບ
- ໃບທະບຽນວິສາຫະກິດ 1 ສະບັບ
- ໜັງສືຢັ້ງຢືນ ແລະ ຮັບຮອງຈາກສະຖາປານິກ ແລະ ວິສະວະກອນ 1 ສະບັບ

## 2. ໃບມອບສິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

.....................................

.....................................                                        ເລກທີ:.........../.........

### ໃບມອບສິດ

ຂ້າພະເຈົ້າຊື່..........................ນາມສະກຸນ.. .......................ວັນເດືອນປີເກີດ.......................

ອາຊີບ.........ສັນຊາດ............ ປັດຈຸບັນຢູ່ບ້ານ...............ເມືອງ..............ແຂວງ.. ......................

ເບີໂທລະສັບ............ບັດປະຈຳຕົວເລກທີ..............ລົງວັນທີ....../....../....... ອອກໃຫ້ທີ່...................

ໜັງສືຜ່ານແດນເລກທີ........................ລົງວັນທີ.............................ອອກໃຫ້ທີ່..........................

ມີຈຸດປະສົງຂໍມອບສິດໃຫ້ທ່ານ......................ນາມສະກຸນ....................ວັນເດືອນປີເກີດ..............

ອາຊີບ.........ສັນຊາດ............ ປັດຈຸບັນຢູ່ບ້ານ...............ເມືອງ..............ແຂວງ.. ......................

ເບີໂທລະສັບ............ບັດປະຈຳຕົວເລກທີ..............ລົງວັນທີ....../....../....... ອອກໃຫ້ທີ່....................

ໜັງສືຜ່ານແດນເລກທີ........................ລົງວັນທີ.............................ອອກໃຫ້ທີ່...........................

ເພື່ອເຮັດໜ້າທີ່.......................................................................................................ແທນຂ້າພະເຈົ້າ.

ດັ່ງນັ້ນ, ຈຶ່ງໄດ້ອອກໃບມອບສິດສະບັບນີ້ໃຫ້ຜູ້ກ່ຽວເພື່ອໄວ້ເປັນຫຼັກຖານ, ຫວັງວ່າພາກສ່ວນທີ່ກ່ຽວຂ້ອງຈະອຳນວຍຄວາມສະດວກ ແລະ ໃຫ້ຄວາມຮ່ວມມືຕາມທາງຄວນດ້ວຍ.

ທີ່.............................., ວັນທີ......../......./.........

| **ຜູ້ມອບສິດ** | **ພະຍານ** | **ຜູ້ຮັບສິດ** |
|---|---|---|
| .................................. | .................................. | .................................. |

## 3. ໃບຢັ້ງຢືນຂອງບໍລິສັດອອກແບບ ແລະ ກໍ່ສ້າງ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**..................................................** **ເລກທີ..........................**

............................................... ວັນທີ......./........./............

**ໃບຢັ້ງຢືນ**

**ຂອງບໍລິສັດອອກແບບ ແລະ ກໍ່ສ້າງ**

ບໍລິສັດ.......................................................ໃບທະບຽນວິສາຫະກິດເລກທີ............................................................ ລົງວັນທີ........./........./......ທີ່ຕັ້ງສຳນັກງານ.............................ເມືອງ................................. ແຂວງ.............................ເປັນບໍລິສັດໄດ້ຮັບການຄິດໄລ່ໂຄງສ້າງ /ອອກ /ວາງຜັງ /ຄວບຄຸມການກໍ່ສ້າງອາຄານທີ່ຢູ່ໃນເຂດ.....................................................ໃນຕອນດິນເລກທີ....................ເມືອງ......................, ແຂວງ.......................................ຊຶ່ງມີລາຍລະອຽດອາຄານດັ່ງນີ້:

(ລະບຸຊະນິດຂອງໂຄງການ, ຈຳນວນຫຼັງ, ປະໂຫຍດການນຳໃຊ້ ແລະ ເນື້ອທີ່ການປຸກສ້າງ).

- ຊະນິດ..............................ຈຳນວນ................................ຫັງ, ເພື່ອໃຊ້ເປັນ........................................................ ເນື້ອທີ່ປຸກສ້າງ...........................ຕາແມັດ 2(M2);
- ຊະນິດ..............................ຈຳນວນ................................ຫັງ, ເພື່ອໃຊ້ເປັນ........................................................ ເນື້ອທີ່ປຸກສ້າງ...........................ຕາແມັດ 2(M2);
- ຊະນິດ..............................ຈຳນວນ.................................ຫັງ, ເພື່ອໃຊ້ເປັນ....................................................... ເນື້ອທີ່ປຸກສ້າງ...........................ຕາແມັດ 2(M2);

ດັ່ງນັ້ນ, ຈຶ່ງຂໍຢັ້ງຢືນ ແລະ ຮັບປະກັນການຄິດໄລ່ໂຄງສ້າງ /ອອກ /ວາງຜັງ /ຄວບຄຸມການກໍ່ສ້າງອາຄານຖືກຕ້ອງຕາມເຕັກນິກວິຊາການ ແລະ ລະບຽບກົດໝາຍກໍ່ສ້າງທີ່ໄດ້ວາງອອກ.

ທີ່..........................., ວັນທີ.....................

**ລາຍເຊັນຜູ້ອຳນວຍການບໍລິສັດ**

4. ໃບອະນຸຍາດປຸກສ້າງ, ອາຄານ ແລະ ໂຮງງານ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**໑໑໑໑໑໑★໑໑໑໑໑໑**

ກະຊວງແຜນການ ແລະ ການລົງທຶນ

ຫ້ອງການສົ່ງເສີມ ແລະ ຄຸ້ມຄອງ ເຂດເສດຖະກິດພິເສດ

ຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ

ເລກທີ: /ຄຂສພ.02

ນະຄອນຫຼວງວຽງຈັນ, ລົງວັນທີ:..........................

**<u>ໃບອະນຸຍາດປຸກສ້າງ</u>**

☐ ການປຸກສ້າງ ☐ ການສ້ອມແປງ ☐ ການຂຸດດິນ-ຖົມດິນ ☐ ການຕິດຕັ້ງ

- ອີງຕາມ ກົດໝາຍວ່າດ້ວຍການກໍ່ສ້າງເຄຫະສະຖານ, ສະບັບເລກທີ 05/ສພຊ, ລົງວັນທີ 26 ພະຈິກ 2009;
- ອີງຕາມ ດຳລັດວ່າດ້ວຍເຂດເສດຖະກິດພິເສດ ສະບັບເລກທີ 188/ລບ, ລົງວັນທີ 07 ມິຖຸນາ 2018;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະຄຸ້ມຄອງເຂດເສດຖະກິດພິເສດ, ແຂວງ ແລະ ນະຄອນຫຼວງ ວຽງຈັນ ສະບັບເລກທີ 1971/ກຜທ, ລົງວັນທີ 15 ສິງຫາ 2018;
- ອີງຕາມ ໃບຄຳຮ້ອງຂໍອະນຸຍາດປຸກສ້າງຂອງບໍລິສັດ ......, ສະບັບເລກທີ ...../....,ລົງວັນທີ ..../.../....;
- ອີງຕາມ ບົດບັນທຶກກອງປະຊຸມ ຂໍອະນຸຍາດຜ່ານແບບກໍ່ສ້າງໂຄງການ........., ຄັ້ງວັນທີ .../.../..........

**ຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ເຫັນດີອອກໃບອະນຸຍາດກໍ່ສ້າງໃຫ້ແກ່:**

**ບໍລິສັດ .................., ຊຶ່ງມີທີ່ຕັ້ງສຳນັກງານຢູ່ໃນເຂດເສດຖະກິດພິເສດ...............**

ເລກປະຈຳຕົວໃບທະບຽນວິສາຫະກິດ

| | | |
|---|---|---|
| | | |

ເລກປະຈຳຕົວຜູ້ເສຍອາກອນ

| | | | | | | | | |
|---|---|---|---|---|---|---|---|---|
| | | | | | | | | |

**ຊຶ່ງມີລາຍລະອຽດຂອງອາຄານ ດັ່ງລຸ່ມນີ້:**

1. ອາຄານຫ້ອງການ, ຈຳນວນ....ຫຼັງ, ມີທັງໝົດ....ຊັ້ນ, ຄວາມສູງ....ແມັດ, ມີເນື້ອທີ່ກໍ່ສ້າງທັງໝົດ............. ຕາແມັດ;
2. ອາຄານໂຮງແຮມ, ຈຳນວນ..... ຫຼັງ, ມີທັງໝົດ..... ຊັ້ນ, ຄວາມສູງ ..... ແມັດ, ມີເນື້ອທີ່ກໍ່ສ້າງທັງໝົດ ... ຕາແມັດ;
3. ອາຄານອາພາດເມັ້ນ, ຈຳນວນທັງໝົດ .... ຫຼັງ, ມີ ..... ຊັ້ນ, ຈຳນວນ ..... ຫຼັງ, ..... ຊັ້ນ, ຈຳນວນ ..... ຫຼັງ, ມີຄວາມສູງ ............ແມັດ, ມີເນື້ອທີ່ທັງໝົດ ........... ຕາແມັດ;
4. ເຮືອນວິນລ່າ, ຈຳນວນ ... ຫຼັງ, ມີ.... ຊັ້ນ, ມີຄວາມສູງ ..... ແມັດ, ມີເນື້ອທີ່ທັງໝົດ ........ ຕາແມັດ;
5. ຫ້າງສັບພະສິນຄ້າ, ຈຳນວນ ..... ຫຼັງ, ມີ.....ຊັ້ນ, ມີຄວາມສູງ ..... ແມັດ, ມີເນື້ອທີ່ທັງໝົດ.......ຕາແມັດ;
6. ອາຄານສະໂມສອນ, ຈຳນວນ .... ຫຼັງ, ມີ ... ຊັ້ນ, ມີຄວາມສູງ .... ແມັດ, ມີເນື້ທີ່ທັງໝົດ ..... ຕາແມັດ;
   ໂດຍມີບໍລິສັດ......... ສຳຫຼວດອອກແບບ ກໍ່ສ້າງສ້ອມແປງເຄຫາສະຖານ ແລະ ຂົວທາງ ຈຳກັດຜູ້ດຽວ, ເປັນຜູ້ຜ່ານ ແລະ ຮັບຮອງແບບກໍ່ສ້າງທີ່ໄດ້ອອກແບບມາຈາກບໍລິສັດ ...............;
7. ໃບອະນຸຍາດສະບັບນີ້ໃຊ້ໄດ້ເຖິງວັນທີ ..... /....../.........;

8. ໃບອະນຸຍາດກໍ່ສ້າງສະບັບນີ້ ຕ້ອງດຳເນີນການກໍ່ສ້າງໃຫ້ສອດຄ່ອງ ຕາມກົດໝາຍວ່າດ້ວຍການກໍ່ສ້າງ ແລະ ກົດໝາຍຜັງເມືອງ; ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ຕາມລະບຽບການອື່ນໆ ທີ່ລັດວາງອອກຢ່າງເຂັ້ມງວດ;

9. ຫ້າມນຳເອົາໃບອະນຸຍາດສະບັບນີ້ໃຫ້ຜູ້ອື່ນໃຊ້ແທນ ຫຼື ປ່ຽນແປງຂໍ້ຄວາມໃດໜຶ່ງໂດຍບໍ່ໄດ້ຮັບອະນຸຍາດຈາກຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ຢ່າງເດັດຂາດ.

**ຫົວໜ້າຄະນະຄຸ້ມຄອງເຂດເສດຖະກິດພິເສດ**
**ນະຄອນຫຼວງວຽງຈັນ**

<u>**ບ່ອນສົ່ງ:**</u>

- ເກັບສຳເນົາ 1 ສະບັບ
- ຜູ້ຂໍອະນຸຍາດ 1 ສະບັບ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ:.........../.........

## ຄຳຮ້ອງ

## ຂໍອອກໃບຢັ້ງຢືນສິ່ງປຸກສ້າງ, ອາຄານ ແລະ ໂຮງງານ

**ຮຽນ:** ທ່ານຫົວໜ້າຄະນະຄຸ້ມຄອງເຂດເສດຖະກິດພິເສດ......................ທີ່ນັບຖືຢ່າງສູງ.

**ເລື່ອງ:** ຂໍອະນຸຍາດອອກໃບຢັ້ງຢືນສິ່ງປຸກສ້າງ, ອາຄານ ແລະ ໂຮງງານ.

ຂ້າພະເຈົ້າຊື່...................................ນາມສະກຸນ.. ............................ອາຍຸ.................ປີ ທະບຽນວິສາຫະກິດເລກທີ.................ລົງວັນທີ.................ທີ່ຕັ້ງສຳນັກງານຢູ່ເຂດ............................ເມືອງ..............................ແຂວງ .. ............................ເບີໂທລະສັບ...... ................ຖືບັດປະຈຳຕົວເລກທີ...... ......................ລົງວັນທີ....../....../............ ອອກໃຫ້ທີ່.......... ...........................ປື້ມສຳມະໂນຄົວເລກທີ........... ລົງວັນທີ......./......../........ໜັງສືຜ່ານແດນເລກທີ...............ລົງວັນທີ..............................ອອກໃຫ້ທີ່.........................

ມີຈຸດປະສົງຂໍອະນຸຍາດຢັ້ງຢືນ☐ ສຳເລັດສິ່ງປຸກສ້າງ☐ , ອາຄານ☐ ໂຮງງານ☐ ສ້ອມແປງ☐ ຮື້ຖອນ............................ ຕອນດິນເລກທີ:..............ເນື້ອທີ່:............ເຮັກຕາ.................ໃນເຂດ................ຊຶ່ງມີລາຍລະອຽດດັ່ງນີ້.

5. ເປັນອາຄານ ( ລະບຸຊະນິດຂອງໂຄງສ້າງ, ຈຳນວນຫຼັງ, ປະໂຫຍດນຳໃຊ້)
   - ຊະນິດ..............................ຈຳນວນ..........ຫຼັງ..........ເພື່ອໃຊ້ເປັນ..............................
   - ຊະນິດ..............................ຈຳນວນ..........ຫຼັງ..........ເພື່ອໃຊ້ເປັນ..............................
   - ຊະນິດ..............................ຈຳນວນ..........ຫຼັງ..........ເພື່ອໃຊ້ເປັນ..............................
   - ຊະນິດ..............................ຈຳນວນ..........ຫຼັງ..........ເພື່ອໃຊ້ເປັນ..............................
6. ບໍລິສັດກໍ່ສ້າງ;...........................................................................................ຊຶ່ງປະກອບມີ:
   - ສະຖາປານິກອອກແບບ/ຜູ້ອອກແບບ ທ່ານ.......................................................................
   - ວິສາວະກອນ/ຜູ້ຄິດໄລ່ໂຄງສ້າງ ທ່ານ............................................................................
   - ສາວະກອນ/ຜູ້ຄຸມງານທ່ານ.......................................................................................
7. ໄລຍະເວລາການກໍ່ສ້າງສຳເລັດພາຍໃນ.............ວັນ ນັບແຕ່ວັນໄດ້ຮັບອະນຸຍາດ..........................
8. ຄວາມຕ້ອງການສາທາລະນຸປະໂພກ ແລະ ສິ່ງອຳນວຍສະດວກຕ່າງໆ:

| ປະເພດ | ໄລຍະເລີ່ມຕົ້ນກໍ່ສ້າງ<br>......./......./.......... | ໄລຍະດຳເນີນການຜະລິດ<br>........./........./............. |
|---|---|---|
| 2. ໄຟຟ້າ | ...................... | |
| 3. ໂທລະສັບ | .......ແມັດກ້ອນ/ວັນ | .......ແມັດກ້ອນ/ວັນ |
| 4. ນ້ຳປະປາ | .......ແມັດກ້ອນ/ວັນ | .......ແມັດກ້ອນ/ວັນ |
| 5. ນ້ຳດິບ | .......ແມັດກ້ອນ/ວັນ | .......ແມັດກ້ອນ/ວັນ |
| 6. ການບຳບັດນ້ຳເສຍ | .......ແມັດກ້ອນ/ວັນ | .......ແມັດກ້ອນ/ວັນ |
| 7. ການຈຳກັດສິ່ງເສດເຫຼືອຂອງຜະລິດ | .............ໂຕນ/ວັນ | .......ໂຕນ/ວັນ |
| 8. ອື່ນໆ | ........................ | ...................... |
| | | |

ຂ້າພະເຈົ້າໃຫ້ຄຳໝັ້ນສັນຍາວ່າໄດ້ຈັດປະຕິບັດ ຕາມກົດໝາຍວ່າດ້ວຍການກໍ່ສ້າງໃຫ້ຖືກຕ້ອງ ຕາມມາດຕະຖານເຕັກນິກ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ ຢ່າງເຂັ້ມງວດ.

ດັ່ງນັ້ນ, ຈຶ່ງສະເໜີມາຍັງທ່ານເພື່ອພິຈາລະນາຕາມທີ່ເຫັນຄວນ.

ທີ່.............................., ວັນທີ......../......./.....

**ລາຍເຊັນຜູ້ຮ້ອງຂໍ**

**<u>ເອກະສານຄັດຕິດ:</u>**

ໃບອະນຸຍາດປຸກສ້າງ ແລະ ອື່ນໆ ຈຳນວນ 1 ຊຸດ;

ໃບຄຳຮ້ອງຂໍສະເໜີອະນຸຍາດອອກໃບຢັ້ງຢືນສິ່ງປຸກສ້າງ 1ສະບັບ;

ສຳເນົາບິດບັນທຶກກວດກາ ແຕ່ລະໄລຍະ 1 ສະບັບ;

ຢັ້ງຢືນ ແລະ ຮັບຮອງຈາກສະຖາປານິກ ແລະ ວິສະວະກອນ 1 ສະບັບ;

ໃບມອບສິດ (ຜູ້ຖືກມອບສິດແລ່ນເອກະສານ) 1 ຊຸດ.

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຜນການ ແລະ ການລົງທຶນ

ຫ້ອງການຄຸ້ມຄອງ ແລະ ສົ່ງເສີມ ຄຸ້ມຄອງເຂດເສດຖະກິດພິເສດ

ຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ນະຄອນຫຼວງວຽງຈັນ, ວັນທີ:...............

**ບົດບັນທຶກການລົງຕິດຕາມກວດກາການປຸກສ້າງ**

ໃນຄັ້ງວັນທີ ...../......./ ......., ຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ, ໄດ້ສົມທົບກັບ ຮ່ວມຂະແໜງການຕ່າງໆກ່ຽວຂ້ອງ (ລາຍລະອຽດມລາຍຊື່ຄັດຕິດມາພ້ອມນີ້), ຕາງໜ້າບໍລິສັດ...................................... (ເຈົ້າຂອງໂຄງການ) ແລະ ບໍລິສັດ .......................................................................(ຜູ້ຮັບເໝົາກໍ່ສ້າງ) ໄດ້ລົງຕິດຕາມ ແລະ ກວດກາຄວາມສຳເລັດຂອງການປຸກສ້າງຕຶກອາຄານປະເພດ.......................................................................ຢູ່ໃນເຂດ.........................................................................................................

ໄລຍະຕົ້ນ☐, ໄລຍະກາງ☐ , ຫຼື ໄລຍະສຸດທ້າຍ ☐ (ໃຫ້ໝາຍ✓ໃສ່ໄລຍະຂອງການລົງຕິດຕາມກວດກາ) ໂດຍມີບັນດາໜ້າວຽກໃນການລົງກວດກາດັ່ງລຸ່ມນີ້:

1. ພາກສ່ວນ.......................................................................................................................;
2. ພາກສ່ວນ.......................................................................................................................;
3. ພາກສ່ວນ.......................................................................................................................;
4. ພາກສ່ວນ.......................................................................................................................;
5. ພາກສ່ວນ.......................................................................................................................;
6. ພາກສ່ວນ...............................................................................................................ແລະ ອື່ນໆ.ໃນນັ້ນທາງບໍລິສັດຜູ້ຮັບເໝົາໄດ້ແຈ້ງຕໍ່ຄະນະກຳມະການກວດກາ ໃນຈຸດທີ່ໄດ້ມີການປຸກສ້າງ ຫລື ດັດແກ້ຈາກແບບ ການກໍ່ສ້າງຄື:

❖ **ຈຸດທີ່ດັດແກ້ຈາກແບບຂອງການກໍ່ສ້າງມີຈຳນວນ.............ຈຸດຄື:**

.......................................................................................................................

.......................................................................................................................

.......................................................................................................................

.......................................................................................................................

❖ **ໜ້າວຽກທີ່ສຳເລັດໃນການປຸກສ້າງຂອງໂຄງການມີດັ່ງນີ້:**

.......................................................................................................................

.......................................................................................................................

.......................................................................................................................

ຜ່ານການລົງຕິດຕາມກວດກາການປຸກສ້າງຂອງໂຄງການໃນຄັ້ງນີ້ ຄະນະຕິດຕາມກວດກາແມ່ນເຫັນດີສະໜັບສະໜູນຕໍ່ໂຄງການກໍ່ສ້າງດັ່ງກ່າວ ໂດຍເບື້ອງຕົ້ນແມ່ນເປັນໄປຕາມທີ່ນິດໄວ້ໃນແບບປຸກສ້າງຂອງທຸກຂັ້ນຕອນຕາມແຕ່ໄລຍະ, ບໍ່ສົ່ງຜົນສະທ້ອນ ແລະ ຖືກຕ້ອງຕາມລະບຽບການທີ່ວາງອອກ. ສໍາລັບການປຸກສ້າງຕ້ອງຮັບປະກັນທາງດ້ານເຕັກນິກຂອງການກໍ່ສ້າງໄດ້ມາດຕະຖານ ທັງຮັບປະກັນຄວາມປອດໄພ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການຂອງຂະແໜງການໂຍທາທິການ ແລະ ຂົນສົ່ງວາງອອກ. ເຊິ່ງຜ່ານການກວດກາ ແລະ ພິຈາລະນາແລ້ວ ຄະນະຕິດຕາມກວດກາສະເໜີໃຫ້ ບໍລິສັດ ຫຼື ຜູ້ຮັບເໜົາໂຄງການກໍ່ສ້າງ ປັບປຸງບາງບັນຫາດັ່ງນີ້:

- **ບາງບັນຫາທີ່ຕ້ອງປັບປຸງມີດັ່ງນີ:**

……………………………………………………………………………………………………

……………………………………………………………………………………………………..

.......................................................................................................................................

ສະນັ້ນ, ຄະນະກໍາມະການກວດກາ ຈຶ່ງໄດ້ເຫັນດີຮ່ວມກັນລົງລາຍເຊັນໃສ່ບົດບັນທຶກຄວາມສໍາເລັດໃນໄລຍະຕົ້ນ ໄລຍະກາງ☐ ຫຼື ໄລຍະສຸດທ້າຍ☐ (ໃຫ້ໝາຍ✓ໃສ່ໄລຍະຂອງການລົງຕິດຕາມກວດກາ) ຂອງການກໍ່ສ້າງໂຄງການ……………………………………………………………………………………, ຂອງບໍລິສັດ……………………………………………………………………………………..........

ດັ່ງນັ້ນ, ຈຶ່ງໄດ້ເຮັດບົດບັນທຶກສະບັບນີ້ໄວ້ເພື່ອເປັນຫຼັກຖານ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດໃນຂັ້ນຕໍ່ໄປຕາມລະບຽບຫຼັກການ.

<u>ຄະນະຕິດຕາມການກວດກາ</u> <u>ເຈົ້າຂອງໂຄງການ</u> <u>ຜູ້ຮັບເໝົາກໍ່ສ້າງ</u>

1. …………………………………………………
2. …………………………………………………
3. …………………………………………………

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຜນການ ແລະ ການລົງທຶນ
ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ
ຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ

# ຄູ່ມືແນະນຳ
# ການອອກໃບຢັ້ງຢືນນຳເຂົ້າ ແລະ ສົ່ງອອກສິນຄ້າໃນເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ.

**ນະຄອນຫຼວງວຽງຈັນ (ສະບັບປີ2021)**

# ບ່ອນອີງທາງດ້ານນິຕິກຳ

1. ກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
2. ກົດໝາຍ ວ່າດ້ວຍຄຸ້ມຄອງສ່ວຍສາອາກອນ ສະບັບເລກທີ 66/ສພຊ, ລົງວັນທີ 17 ມິຖຸນາ 2019;
3. ກົດໝາຍ ວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 48/ສພຊ, ລົງວັນທີ 20 ມິຖຸນາ 2018;
4. ກົດໝາຍ ວ່າດ້ວຍພາສີ ສະບັບເລກທີ 81/ສພຊ, ລົງວັນທີ 29 ມິຖຸນາ 2020;
5. ດຳລັດ ວ່າດ້ວຍເຂດເສດຖະກິດພິເສດ ສະບັບເລກທີ 188/ລບ, ລົງວັນທີ 07 ມິຖຸນາ 2018;
6. ບົດແນະນຳການໃຫ້ນະໂຍບາຍສົ່ງເສີມການລົງທຶນດ້ານພາສີ ແລະ ອາກອນມູນຄ່າເພີ່ມ ສຳລັບວິສະຫາກິດ ສະບັບເລກທີ 01/ຄລທ.ສ; ລົງວັນທີ 02 ມັງກອນ 2019;
7. ອີງຕາມ ຄຳສັ່ງຊີ້ນຳຂອງທ່ານນາຍົກລັດຖະມົນຕີ ກ່ຽວກັບການປັບປຸງລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດ ຢູ່ ສປປ ລາວ ສະບັບເລກທີ 02/ນຍ, ລົງວັນທີ 01 ກຸມພາ 2018.

# ພາກທີ I
# ຫຼັກການ, ຂັ້ນຕອນ ແລະ ວິທີການ ອອກໃບຢັ້ງຢືນນຳເຂົ້າ-ສົ່ງອອກສິນຄ້າ ໃນເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ.

## 10. ການອອກໃບຢັ້ງຢືນນຳເຂົ້າ-ສົ່ງອອກສິນຄ້າ.

ການອອກໃບຢັ້ງຢືນນຳເຂົ້າ-ສົ່ງອອກສິນຄ້າ ແມ່ນການອອກເອກະສານກ່ຽວກັບການຢັ້ງຢືນນຳເຂົ້າ-ສົ່ງອອກສິນຄ້າພາຍໃນເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ໃຫ້ແກ່ບຸກຄົນ ແລະ ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງ ເພື່ອນຳເຂົ້າມາຮັບໃຊ້ໃນການເຄື່ອນໄຫວກິດຈະການ, ພ້ອມທັງອຳນວຍຄວາມສະດວກ ໃຫ້ແກ່ການຄຸ້ມຄອງ-ບໍລິຫານ ແລະ ການປົກປັກຮັກສາສິນຄ້າ. ຊຶ່ງເອກະສານຢັ້ງຢືນນຳເຂົ້າ-ສົ່ງອອກສິນຄ້າ ຂອງຜູ້ລົງທຶນດັ່ງກ່າວ ແມ່ນຮັບຮອງ ແລະ ຢັ້ງຢືນ ໂດຍຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## 11. ການອະທິບາຍຄຳສັບ.

- **ວັດຖຸດິບ** ໝາຍເຖິງ: ວັດຖຸທີ່ໄດ້ມາຈາກຊັບພະຍາກອນແຮ່ທາດທຳມະຊາດ (ເຊັ່ນ: ໂລຫະ, ອະໂລຫະ), ມາຈາກແຫຼ່ງກະສິກຳ ແລະ ປ່າໄມ້ (ເຊັ່ນ: ພືດ ແລະ ສັດລ້ຽງປະເພດຕ່າງໆ), ມາຈາກແຫຼ່ງການຜະລິດຢູ່ຕ່າງປະ ເທດ (ເຊັ່ນ: ຜະລິດຕະພັນເຄິ່ງສຳເລັດຮູບ) ແລະ ມາຈາກສິ່ງເສດເຫຼືອ (ເຊັ່ນ: ເສດເຈ້ຍ, ເສດໄມ້, ເສດເຫຼັກ, ເສດຢາງປຣາສະຕິກ) ຍົກເວັ້ນ ສິ່ງເສດເຫຼືອທີ່ເປັນອັນຕະລາຍຕໍ່ສິ່ງແວດລ້ອມ;
- **ຊິ້ນສ່ວນປະກອບ** ໝາຍເຖິງ: ວັດຖຸໃດໜຶ່ງທີ່ນຳໃຊ້ເປັນສ່ວນປະກອບ ໃນການຜະລິດໃຫ້ກາຍເປັນຜະລິດຕະພັນສຳເລັດຮູບອື່ນ;
- **ອາໄຫຼ່** ໝາຍເຖິງ: ວັດຖຸໃຊ້ສຳລັບປ່ຽນຖ່າຍໃນເຄື່ອງຈັກ, ອຸປະກອນ ແລະ ເຄື່ອງມືຕ່າງໆ;
- **ເຄື່ອງຈັກ** ໝາຍເຖິງ: ສິ່ງທີ່ປະກອບຫຼາຍຊິ້ນສ່ວນ ທີ່ນຳໃຊ້ເພື່ອການຜະລິດ, ນຳສົ່ງພະລັງງານ, ປ່ຽນ ຫລື ສັບປ່ຽນຂອງພະລັງງານໃດເປັນພະລັງງານອື່ນ ເພື່ອສ້າງເປັນຊັບສິນບັດຄົງທີ່ຂອງວິສາຫະກິດ;
- **ພາຫະນະກົນຈັກຮັບໃຊ້ການຜະລິດທາງກົງ** ໝາຍເຖິງ: ພາຫະນະກົນຈັກທີ່ຮັບໃຊ້ການກໍ່ສ້າງ, ການຂຸດຄົ້ນບໍ່ແຮ່,ການຍົກຍໍ ແລະ ຄ່ຽນຖ່າຍ, ການບຸກໂມ້, ການຜະລິດເບຕົງ, ການຜະລິດກະສິກຳ ແລະ ອຸດສາຫະກຳປຸງແຕ່ງ, ການບໍລິການສາທາລະນະເປັນຕົ້ນ ລົດບັດ 25 ບ່ອນນັ່ງຂຶ້ນໄປ ສຳລັບວຽກງານຂົນສົ່ງ ແລະ ທ່ຽວທ່ອງການອະນາໄມຕົວເມືອງ, ອຸດສາຫະກຳຂົນສົ່ງສະເພາະ ເປັນຕົ້ນ ປະເພດຫົວລາກ-ຫາງລາກ, ລົດນໍ້າ, ລົດຕູ້ແຊ່ ແລະ ລົດຂົນສົ່ງວັດຖຸອັນຕະລາຍ (ລົດບັນທຸກນໍ້າມັນ, ລົດອາຍແກັສ, ລົດຂົນສົ່ງສານເຄມີ) ແລະ ລົດອື່ນທີ່ຄ້າຍຄືງ, ລົດຕັກ, ລົດຈົກ-ຕັກ, ລົດກວາດ, ລົດດູດ, ລົດເຄຣນ, ລົດໂລ, ລົດຍົກຍໍ (ຟອກລິບ);
- **ຊັບສິນບັດຄົງທີ່** ໝາຍເຖິງ: ຊັບສິນຂອງບໍລິສັດ ທີ່ບັນຈຸເຂົ້າໃນບັນຊີຊັບສິນຄົງທີ່ ແລະ ຕ້ອງຫັກຄ່າລຸ້ຍຫ້ຽນແຕ່ລະປີຕາມກົດໝາຍ.
- **ວັຖຸປະກອບ** ໝາຍເຖິງ: ຜະລິດຕະພັນສຳເລັດຮູບ ຫຼືເຄິ່ງສຳເລັດຮູບ ທີ່ນຳໃຊ້ເຂົ້າໃນການຜະລິດ ຫຼື ປະກອບເປັນຜະລິດຕະພັນສຳເລັດຮູບອື່ນ.

## 12. ຄຳຮ້ອງຂໍຂຶ້ນທະບຽນການຢັ້ງຢືນນຳເຂົ້າ-ສົ່ງອອກ ໃນເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ.

ບຸກຄົນ ແລະ ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງຂຶ້ນທະບຽນຢັ້ງຢືນ ການນຳເຂົ້າ-ສົ່ງອອກ ຢູ່ໃນເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ຕ້ອງຍື່ນຄຳຮ້ອງ ແລະ ແຜນການນຳເຂົ້າ-ສົ່ງອອກ ປະຈຳປີ ຕໍ່ຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ຕາມທີ່ລະບຸໄວ້ໃນຂໍ້ທີ 08 ຂອງປຶ້ມຄູ່ມືສະບັບນີ້.

## 13. ການກວດກາຄຳຮ້ອງຂໍຂຶ້ນທະບຽນຢັ້ງຢືນ.

ພາຍຫຼັງທີ່ສຳນວນຄຳຮ້ອງຂໍຂຶ້ນທະບຽນຢັ້ງຢືນ ໄດ້ຖືກມອບຮັບຈາກ ໜ່ວຍງານບໍລິການການລົງທຶນປະຕູດຽວແລ້ວ ຂະແໜງຮັບຜິດຊອບວຽກງານດັ່ງກ່າວ ຕ້ອງກວດກາຄວາມຖືກຕ້ອງດ້ານເອກະສານ ແລະ ຈັດກອງປະຊຸມຜ່ານແຜນນຳເຂົ້າ-ສົ່ງອອກ ປະຈຳປີ ຂອງວິສາຫະກິດ ພ້ອມທັງຮ່າງບົດບັນທຶກກອງປະຊຸມ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແລະ ເຊັນຢັ້ງຢືນຄວາມຖືກຕ້ອງ ເພື່ອສະເໜີໃຫ້ ຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ພິຈາລະນາອະນຸມັດອອກໃບຢັ້ງຢືນ ແລະ ໜັງສືສະເໜີຫາຂະແໜງການກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ແລະ ຕິດຕາມການນຳເຂົ້າຕົວຈິງ.

## 14. ໃບຢັ້ງຢືນນຳເຂົ້າ-ສົ່ງອອກ ໃນເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ.

ໃບຢັ້ງຢືນນຳເຂົ້າ-ສົ່ງອອກ ແມ່ນເອກະສານທີ່ເປັນຫຼັກຖານຕົ້ນຕໍ ເພື່ອຢັ້ງຢືນການນຳເຂົ້າ-ສົ່ງອອກ ຢ່າງເປັນທາງການຂອງວິສາຫະກິດທີ່ລົງທຶນ ຢູ່ພາຍໃນເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ໄປຍັງ ສປປ ລາວ ແລະ ບັນດາປະເທດທີ່ສາມ ແລ້ວມອບໃຫ້ແກ່ຜູ້ເປັນເຈົ້າຂອງວິສາຫະກິດພຽງໃບດຽວ ເກັບຮັກສາໄວ້ເປັນຫຼັກຖານ ແລະ ຂະແໜງ ການກ່ຽວຂ້ອງເພື່ອຕິດຕາມ ຈົນກວ່າຈະມີການນຳເຂົ້າຄົບຕາມຈຳນວນ ຕາມການສະເໜີ.

## 15. ແຜນນຳເຂົ້າ-ສົ່ງອອກ ປະຈຳປີ ຂອງວິສາຫະກິດ.

ການສ້າງແຜນນຳເຂົ້າ-ສົ່ງອອກ ປະຈຳປີ ແມ່ນຄວາມຮັບຜິດຊອບຂອງວິສາຫະກິດ ແລະ ໂຄງການຕ່າງໆ ເພື່ອນຳສະເໜີແຜນປະຈຳປີ ໂດຍສອດຄ່ອງກັບບົດວິພາກເສດຖະກິດ-ເຕັກນິກ, ແບບແຜນຜັງ (Devise), ໃບຄິດໄລ່ບໍລິມາດວຽກຄວາມຕ້ອງການຕົວຈິງທີ່ມີການຮັບຮອງເປັນທາງການ ຈາກຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ, ຮ່ວມກັບຂະແໜງການກ່ຽວຂ້ອງ ແລະ ຖືກຕ້ອງຕາມກົດໝາຍ.

ແຜນການນຳເຂົ້າ-ສົ່ງອອກ ປະຈຳປີ ມີອາຍຸການນຳໃຊ້ພາຍໃນ 01 ປີ ນັບແຕ່ມື້ລົງລາຍເຊັນຮັບຮອງແຜນການດັ່ງກ່າວເປັນຕົ້ນໄປ. ພາຍຫຼັງໝົດອາຍຸການນຳໃຊ້ ບັນດາສິນຄ້າທີ່ກຳນົດໄວ້ໃນແຜນນຳເຂົ້າ-ສົ່ງອອກ ຊຶ່ງຍັງບໍ່ຖືກນຳເຂົ້າຕ້ອງຖືກລົບລ້າງໃນທັນທີ.

## 16. ແຜນການນຳເຂົ້າ-ສົ່ງອອກ ເພີ່ມເຕີມ ຫຼື ສຸກເສີນ.

ແຜນນຳເຂົ້າເພີ່ມເຕີມ ຫຼື ສຸກເສີນ ແມ່ນແຜນນຳເຂົ້າ-ສົ່ງອອກ ທີ່ມີຄວາມຈຳເປັນຕ້ອງການນຳເຂົ້າເພີ່ມເຕີມ ຫຼື ສຸກເສີນ ເພື່ອມາຮັບໃຊ້ການຜະລິດຂອງວິສາຫະກິດ ຊຶ່ງມີມູນຄ່າ ແລະ ບໍລິມາດຄວາມຕ້ອງການເພີ່ມເຕີມຕົວຈິງຂອງ ວິສາຫະກິດ. ແຜນນຳເຂົ້າເພີ່ມເຕີມ ຫຼື ສຸກເສີນ ມີອາຍຸການນຳໃຊ້ຕາມກຳນົດເວລາຂອງແຜນນຳເຂົ້າປະຈຳປີ ທີ່ໄດ້ຖືກຮັບຮອງ.

ກໍລະນີຂໍນຳເຂົ້າເພີ່ມເຕີມ ຫຼື ສຸກເສີນ ແມ່ນໃຫ້ຍື່ນໜັງສືສະເໜີພ້ອມແຜນການດັ່ງກ່າວ ຕໍ່ຄະນະຄຸ້ມຄອງເຂດເສດ ຖະກິດພິເສດ ນະຄອນຫຼວງວຽງຈັນ ຄົ້ນຄ້ວາ, ພິຈາລະນາອະນຸມັດ ພາຍໃນ 07 ວັນລັດຖະການ, ຊຶ່ງມີອາຍຸການນຳໃຊ້ຕາມທີ່ກຳນົດໄວ້ ໃນແຜນນຳເຂົ້າປະຈຳປີທີ່ໄດ້ຖືກຮັບຮອງ. ພ້ອມທັງນຳສົ່ງໃຫ້ຂະແໜງການກ່ຽວຂ້ອງ ພາຍໃນ 02 ວັນລັດຖະການ.

ໃນໄລຍະທີ່ຍັງດຳເນີນຂັ້ນຕອນສະເໜີຂໍແຜນນຳເຂົ້າ-ສົ່ງອອກປະຈຳປີ, ບໍ່ທັນໄດ້ຖືກຮັບຮອງ ແຕ່ວິສາຫະກິດຫາກມີຄວາມຈຳເປັນຕ້ອງນຳເຂົ້າວັດຖຸດິບ ເພື່ອມາທຳການຜະລິດ ແມ່ນຕ້ອງໄດ້ຮັບການຢັ້ງຢືນຂໍ້ມູນຕາມແຜນນຳເຂົ້າປະຈຳປີຈາກຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ເພື່ອນຳໄປຂໍຄ້ຳປະກັນເອົາສິນຄ້າອອກສາງ ຫຼື ດ່ານ ກ່ອນການແຈ້ງພາສີເປັນລາຍລະອຽດຕາມກົດໝາຍພາສີ; ພາຍຫຼັງທີ່ມີການຮັບຮອງແຜນນຳເຂົ້າປະຈຳປີແລ້ວ ຈຶ່ງນຳໄປສະສາງການຄ້ຳປະກັນ ຕາມກົດໝາຍພາສີ ແລະ ລະບຽບການຢ່າງເຂັ້ມງວດ.

## 17. ເງື່ອນໄຂຂອງຜູ້ສະເໜີ ຂໍອະນຸຍາດອອກໃບຢັ້ງຢືນນຳເຂົ້າ-ສົ່ງອອກ.

- ຕ້ອງເປັນບຸກຄົນ, ນິຕິບຸກຄົນພາຍໃນ ແລະ ຕ່າງປະເທດ;
- ຫົວໜ່ວຍບໍລິສັດ ຫຼື ວິສາຫະກິດ ຕ້ອງນອນໃນເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ;
- ວິສາຫະກິດນັ້ນ ຕ້ອງນອນໃນກິດຈະການສົ່ງເສີມການລົງທຶນ (ຕາມກົດໝາຍສົ່ງເສີມການລົງທຶນ) ແລະ ດຳລັດວ່າດ້ວຍເຂດເສດຖະກິດພິເສດ;
- ຕ້ອງມີການລົງທຶນຢ່າງໜ້ອຍ 1,2 ຕື້ກີບ ຫຼື ມີການນຳໃຊ້ວິຊາການລາວແຕ່ 30 ຄົນຂຶ້ນໄປ ຫຼື ມີການນຳໃຊ້ແຮງງານລາວທີ່ມີສັນຍາແຮງງານຢ່າງຕ່ຳ 1 ປີ ແຕ່ 50 ຄົນຂຶ້ນໄປ;
- ຕ້ອງດຳເນີນທຸລະກິດປົກກະຕິ ແລະ ປະຕິບັດພັນທະພາສີ-ອາກອນ ຕາມກົດໝາຍ ແລະ ລະບຽບການ ໂດຍມີການຢັ້ງຢືນການເສຍພັນທະອາກອນປະຈຳປີ.

## 18. ເອກະສານປະກອບເພື່ອຂໍອະນຸຍາດອອກໃບຢັ້ງຢືນນຳເຂົ້າ-ສົ່ງອອກ.

- ຄຳຮ້ອງສະເໜີຂໍນຳເຂົ້າ-ສົ່ງອອກ. (ແບບຟອມ 1);
- ແຜນວາດ ແລະ ແບບແຜນຄິດໄລ່ລະອຽດຂອງແຕ່ລະໂຄງການປະຈຳປີ;
- ບັນຊີລາຍການວັດສະດຸ, ອຸປະກອນລະອຽດ (Master List) ຂອງແຕ່ລະໜ້າວຽກ, ບັນຊີວັດຖຸດິບ ແລະ ອຸປະກອນ (ບັນຊີອາດມີການດັດສົມໄດ້ຕາມການປັບປຸງແຜນວາດ ແລະ ການຜະລິດຕົວຈິງ). (ຕາມແບບຟອມ 05 ກົມພາສີ, ກະຊວງການເງິນ);
- ສັນຍາເຊົ່າດິນ ລະຫວ່າງ ຜູ້ລົງທຶນກັບຜູ້ພັດທະນາ (ພ້ອມດ້ວຍໃບບິນມອບພັນທະອາກອນການເຊົ່າທີ່ດິນ);
- ສຳເນົາໃບທະບຽນວິສາຫະກິດ;
- ໃບອະນຸຍາດປຸກສ້າງ (ກໍລະນີບໍລິສັດ/ໂຮງງານ ຂໍປຸກສ້າງໃໝ່);
- ແຜນນຳເຂົ້າ-ສົ່ງອອກປະຈຳປີ ທີ່ຖືກຮັບຮອງແລ້ວ (ກໍລະນີສົ່ງອອກ);
- ແຜນການຜະລິດສົ່ງອອກພາຍໃນ ແລະ ຕ່າງປະເທດ (ແບບຟອມ 06 ) (ກໍລະນີສົ່ງອອກ);
- ໃບຢັ້ງຢືນມາດຕະຖານຜະລິດຕະພັນ (ກໍລະນີສົ່ງອອກ)

- ➢ ສຳເນົາໃບຢັ້ງຢືນຜົນກະທົບຕໍ່ສິ່ງແວດລ້ອມ (ຖ້າມີ);
- ➢ ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ຫຼື CO ( ກໍລະນີສົ່ງອອກ);
- ➢ ສຳເນົາໃບຢັ້ງຢືນເລກປະຈຳຕົວຜູ້ເສຍອາກອນ (ສຳລັບຜູ້ລົງທຶນໃໝ່);
- ➢ ສຳເນົາໃບຢັ້ງຢືນການມອບພັນທະອາກອນປະຈຳປີຜ່ານມາ (ໄລ່ລຽງແລ້ວ);
- ➢ ໃບມອບສິດ (ແບບຟອມ 3) ກໍລະນີຕາງໜ້າເປັນຜູ້ມາພົວພັນປະກອບເອກະສານ.
- ➢ ໃບອະນຸຍາດອື່ນໆ ຈາກຂະແໜງການກ່ຽວຂ້ອງ (ຖ້າມີ)

## 19. ເອກະສານປະກອບເພື່ອຂໍອະນຸຍາດອອກໃບຢັ້ງຢືນນຳເຂົ້າ-ສົ່ງອອກ.

- ➢ ບໍລິສັດ ຫຼື ວິສາຫະກິດຕ້ອງຍື່ນຄຳຮ້ອງ, ແຜນນຳເຂົ້າ-ສົ່ງອອກປະຈຳປີ ແລະ ເອກະສານທີ່ກ່ຽວຂ້ອງຕາມຂໍ້ທີ 8 ຂອງຄູ່ມື ຕໍ່ໜ່ວຍງານບໍລິການການລົງທຶນປະຕູດຽວ, ຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ກວດກາເອກະສານຖືກຕ້ອງຄົບຖ້ວນ, ພ້ອມທັງສົ່ງໃຫ້ຂະແໜງການກ່ຽວຂ້ອງ ເພື່ອກວດຜ່ານທາງດ້ານເຕັກນິກ ກ່ອນເຂົ້າຮ່ວມກອງປະຊຸມຜ່ານແຜນນຳເຂົ້າ-ສົ່ງອອກ ປະຈຳປີ;
- ➢ ຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ຈັດກອງປະຊຸມຜ່ານແຜນນຳເຂົ້າ-ສົ່ງອອກ ຮ່ວມກັບຂະແໜງການກ່ຽວຂ້ອງພາຍໃນ 07 ວັນລັດຖະການ, ຫຼັງຈາກນັ້ນ, ບໍລິສັດ ຫຼື ວິສາຫະກິດ ຕ້ອງປັບປຸງແຜນດັ່ງກ່າວ ຕາມມະຕິກອງປະຊຸມ ແລະ ນຳສົ່ງໃຫ້ ຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ພາຍໃນ 15 ວັນລັດຖະການ ເພື່ອຮັບຮອງແຜນການດັ່ງກ່າວ. ກໍລະນີ ວິສາຫະກິດ ຫາກບໍ່ປັບປຸງແຜນພາຍໃນກຳນົດເວລາດັ່ງກ່າວ ຖືວ່າວິສາຫະກິດນັ້ນໄດ້ສະຫຼະສິດໃນການໃຫ້ນະໂຍບາຍ, ຖ້າວິສາຫະກິດຕ້ອງສືບຕໍ່ຂໍນະໂຍບາຍແມ່ນ ໃຫ້ຍື່ນເອກະສານຄືນໃໝ່;
- ➢ ຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ພິຈາລະນາຮັບຮອງອອກໃບຢັ້ງຢືນນຳເຂົ້າ-ສົ່ງອອກ, ພ້ອມທັງນຳສົ່ງໃຫ້ ບໍລິສັດ ຫຼື ວິສາຫະກິດ ລວມທັງຂະແໜງການກ່ຽວຂ້ອງ ພາຍໃນ 07 ວັນລັດຖະການ ເພື່ອຕິດຕາມການນຳເຂົ້າ-ສົ່ງອອກ ຕາມລະບຽບຫຼັກການ.
- ➢ ກໍລະນີບໍລິສັດ ຫຼື ວິສາຫະກິດ ເຄີຍສະເໜີແຜນການນຳເຂົ້າ-ສົ່ງອອກ ປະຈຳປີຜ່ານມາແລ້ວ ຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ສົມທົບກັບວິສາຫະກິດດັ່ງກ່າວ ເພື່ອສະຫຼຸບ, ຕີລາຄາ ແລະ ປະເມີນການຈັດຕັ້ງປະຕິບັດໂຄງການລົງທຶນໃນປີຜ່ານມາ ແລ້ວສັງລວມແຜນຄວາມຕ້ອງການຕົວຈິງ ຂອງປີ ຖັດໄປໃຫ້ລະອຽດ; ສ່ວນແຜນນຳເຂົ້າປະຈຳງວດ ແລະ/ຫຼື ຄັ້ງທີ ທີ່ນອນໃນແຜນລວມປະຈຳປີ ແມ່ນໃຫ້ນຳສະເໜີແຜນການດັ່ງກ່າວ ຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ເປັນຜູ້ພິຈາລະນາຮັບ ຮອງໃບຢັ້ງຢືນການນຳເຂົ້າ-ສົ່ງອອກ ພາຍໃນ 03 ວັນລັດຖະການ.

## 20. ມາດຕະການຕໍ່ຜູ້ລະເມີດ.

ພາຍຫຼັງບໍລິສັດ ຫຼື ວິສາຫະກິດ ໄດ້ຮັບໃບຮັບຮອງແຜນນຳເຂົ້າ-ສົ່ງອອກ ຈາກຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ເປັນທີ່ຮຽບຮ້ອຍແລ້ວຕ້ອງນຳໃຊ້ເຂົ້າໃນເປົ້າໝາຍຂອງໂຄງການ, ຖ້າຫາກນຳໃຊ້ສິດບໍ່ຖືກຕ້ອງຕາມເປົ້າໝາຍ, ນຳໄປຈຳໜ່າຍຂາຍພາຍໃນ, ໂອນກຳມະສິດ ຫຼື ຮູບການການກະທຳອື່ນໆ ທີ່ຜິດກົດໝາຍຕາມນະໂຍບາຍສົ່ງການລົງທຶນດ້ວຍການຍົກເວັ້ນ, ຫຼຸດຜ່ອນ ຫຼື ນຳເຂົ້າຊົ່ວຄາວ ໂດຍບໍ່ໄດ້ຮັບອະນຸຍາດຈາກ ຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ, ຂະແໜງການເງິນ (ພາສີ) ຕ້ອງຖືກດຳເນີນຄະດີເສຍພາສີ-ອາກອນ ພ້ອມປັບໃໝ ຕາມສະຖານເບົາ ຫຼື ໜັກ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍພາສີ ຢ່າງເຂັ້ມງວດ.

## 21. ການຈັດຕັ້ງປະຕິບັດ.

ບໍລິສັດ ຫຼື ວິສາຫະກິດ ຕ້ອງໄດ້ຮັບການອະນຸຍາດ ເຄື່ອນໄຫວດຳເນີນທຸລະກິດຢູ່ພາຍໃນ ເຂດເສດຖະກິດພິເສດ ຈາກຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ໂດຍສົມທົບກັບຂະແໜງການກ່ຽວຂ້ອງ ຈັດຕັ້ງປະຕິ ບັດຕາມຄູ່ມືແນະນຳສະບັບນີ້ ຢ່າງເຂັ້ມງວດ.

ຮູບທີ 1 : ຂັ້ນຕອນຂໍອະນຸຍາດນຳເຂົ້າ-ສົ່ງອອກ ແລະ ໃບຢັ້ງຢືນນຳເຂົ້າ-ສົ່ງອອກ



## ພາກທີ II
## ຄຳຮ້ອງຂໍອະນຸຍາດ ແລະ ແບບຟອມຕ່າງໆ ກ່ຽວກັບການຂໍອອກໃບຢັ້ງຢືນນຳເຂົ້າ-ສົ່ງອອກສິນຄ້າ ໃນເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ.

ແບບຟອມທີ 1 ໃບຄຳຮ້ອງຂໍອະນຸຍາດຜ່ານແຜນນຳເຂົ້າ-ສົ່ງອອກ ປະຈຳປີ.

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຊື່ວິສາຫະກິດ.......................... ເລກທີ:.........../......

### ຄຳຮ້ອງ
### ຂໍອະນຸຍາດຜ່ານແຜນນຳເຂົ້າ-ສົ່ງອອກ

**ຮຽນ:** ທ່ານຫົວໜ້າຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ທີ່ນັບຖື
**ເລື່ອງ:** ຂໍອະນຸຍາດຜ່ານແຜນນຳເຂົ້າ-ສົ່ງອອກ ປະຈຳປີ.

- ອີງຕາມ ໃບທະບຽນວິສາຫະກິດສະບັບເລກທີ.........................ລົງວັນທີ..............................
- ອີງຕາມ ບົດບັນທຶກກອງປະຊຸມຜ່ານແຜນຮ່ວມກັບຂະແໜງການ.........................................

ບໍລິສັດ ຫຼື ວິສາຫະກິດ ຫຼື ໂຮງງານ...................................................................................................ທະບຽນວິສາຫະກິດເລກທີ......................................................................ລົງວັນທີ.........../ .........../ ...........ດຳເນີນທຸລະກິດ.....................................ສຳນັກງານຕັ້ງຢູ່ເຂດ:.......................................ເມືອງ................................ແຂວງ,ນະຄອນຫຼວງ.....................................ເບີໂທລະສັບ.......................ແຟັກ..............

ມີຈຸດປະສົງຂໍອະນຸຍາດນຳເຂົ້າ-ສົ່ງອອກສິນຄ້າ ຈາກປະເທດ ຫຼື ໄປປະເທດ...................................ຊຶ່ງມີລາຍລະອຽດຂອງສິນຄ້າດັ່ງລຸ່ມນີ້:

| ລ/ດ | ລາຍການສິນຄ້າ | ຈຳນວນ | ຫົວໜ່ວຍ | ລາຄາ $ | ລາຄາລວມ $ | ນ້ຳໜັກ KG | ດ່ານນຳເຂົ້າ |
|---|---|---|---|---|---|---|---|
| 01 | | | | | | | |
| 02 | | | | | | | |

ດັ່ງນັ້ນ, ຈຶ່ງຮຽນສະເໜີມາທ່ານເພື່ອຄົ້ນຄວ້າ ແລະ ພິຈາລະນາ ຕາມລະບຽບການດ້ວຍ.

ທີ່................................,
ວັນທີ......../......./.........

**ລາຍເຊັນຜູ້ຮ້ອງຂໍ**

ແບບຟອມທີ 2 ໃບຄຳຮ້ອງຂໍອະນຸຍາດນຳເຂົ້າ-ສົ່ງອອກ ປະຈຳງວດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຊື່ວິສາຫະກິດ.................................. ເລກທີ:.........../.........

**ຄຳຮ້ອງ**

**ຂໍອະນຸຍາດນຳເຂົ້າ-ສົ່ງອອກ ປະຈຳງວດ**

**ຮຽນ:** ທ່ານຫົວໜ້າຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ທີ່ນັບຖື

**ເລື່ອງ:** ຂໍອະນຸຍາດນຳເຂົ້າ-ສົ່ງອອກ ປະຈຳງວດ ແລະ/ຫຼື ຄັ້ງທີ.........ປີ..........................

- ອີງຕາມ ໃບທະບຽນ..........ສະບັບເລກທີ...........ລົງວັນທີ..............................................
- ອີງຕາມ ແຜນປະຈຳປີ ແລະ/ຫລືແຜນເພີ່ມເຕີມ......ສະບັບເລກທີ........ລົງວັນທີ.......(ລຳດັບທີ........)

ບໍລິສັດ ຫລື ວິສາຫະກິດ ຫລື ໂຮງງານ.....................................................ທະບຽນວິສາຫະກິດເລກທີ ........................................................ລົງວັນທີ.........../ .........../ ...........ດຳເນີນທຸລະກິດ.................................... ສຳນັກງານຕັ້ງຢູ່ເຂດ:.......................................ເມືອງ...................ແຂວງ,ນະຄອນຫຼວງ..........................ເບີໂທລະສັບ ..................ແຟັກ..................ມີຈຸດປະສົງຂໍອະນຸຍາດນຳເຂົ້າ-ສົ່ງອອກສິນຄ້າ ຈາກປະເທດ ຫຼື ໄປປະເທດ....................................ຊຶ່ງມີລາຍລະອຽດຂອງສິນຄ້າດັ່ງລຸ່ມນີ້:

| ລ/ດ | ລາຍການສິນຄ້າ | ຈຳນວນ | ຫົວໜ່ວຍ | ລາຄາ $ | ລາຄາລວມ $ | ນ້ຳໜັກ KG | ດ່ານນຳເຂົ້າ |
|---|---|---|---|---|---|---|---|
| 01 | | | | | | | |
| 02 | | | | | | | |

ດັ່ງນັ້ນ, ຈຶ່ງຮຽນສະເໜີມາທ່ານເພື່ອຄົ້ນຄວ້າ ແລະ ພິຈາລະນາ ຕາມລະບຽບການດ້ວຍ.

**ທີ່..............................., ວັນທີ......../......./.........**

**ລາຍເຊັນຜູ້ຮ້ອງຂໍ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຊື່ວິສາຫະກິດ.................................. ເລກທີ:........../.........

## ໃບມອບສິດ

ຂ້າພະເຈົ້າຊື່.........................ນາມສະກຸນ.. .......................ວັນເດືອນປີເກີດ.....................,ອາຊີບ......................ສັນຊາດ ......................ປັດຈຸບັນຢູ່ບ້ານ........................ເມືອງ.......................ແຂວງ.. ..................ເບີໂທລະສັບ.............ບັດປະຈຳຕົວ ເລກທີ...............ລົງວັນທີ....../....../....... ອອກໃຫ້ທີ່....................ໜັງສືຜ່ານແດນເລກທີ....................................ລົງວັນທີ ..............................ອອກໃຫ້ທີ່.............................

